ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 109 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 19 ສິງຫາ 2022

ລັດຖະດຳລັດ
ຂອງປະທານປະເທດ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ສະບັບເລກທີ 52/ສພຊ, ລົງວັນທີ 7 ກໍລະກົດ 2022 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ຄວາມປອດໄພຂອງເຂື່ອນ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 02/ຄປຈ, ລົງວັນທີ 5 ສິງຫາ 2022.

ປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 52 / ສພຊ
ນະຄອນຫຼວງວຽງຈັນ, ວັນທີ 07 / 07 / 22

ມະຕິ
ຂອງກອງປະຊຸມສະພາແຫ່ງຊາດ
ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ ໃນວາລະຂອງກອງປະຊຸມ ຕັ້ງວັນທີ 5 ກໍລະກົດ 2022 ແລະ ຖືກພິຈາລະນາຮັບຮອງເອົາ ໃນວາລະຕອນບ່າຍຂອງວັນທີ 7 ກໍລະກົດ 2022.

ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 20 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 7 ກໍລະກົດ 2022

ກົດໝາຍ
ວ່າດ້ວຍຄວາມປອດໄພຂອງເຂື່ອນ

ພາກທີ I
ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ ກວດກາ ແລະ ຄວບຄຸມ ວຽກງານຄວາມປອດໄພຂອງເຂື່ອນ ເພື່ອເຮັດໃຫ້ ການສຶກສາສຳຫຼວດ, ການອອກແບບ, ການກໍ່ສ້າງ, ການດຳເນີນງານ ຂອງເຂື່ອນ ແລະ ການສ້າງແຜນຮັບມືສຸກເສີນ ໃຫ້ມີ ປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນການປ້ອງກັນຜົນກະທົບຕໍ່ ຊີວິດ, ສຸຂະພາບ, ຊັບສິນ ຂອງພົນລະເມືອງ, ຂອງລັດ ແລະ ສິ່ງແວດລ້ອມ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ໄປຕາມທິດສີຂຽວ ແລະ ຍືນຍົງ.

ມາດຕາ 2 ຄວາມປອດໄພຂອງເຂື່ອນ

ຄວາມປອດໄພຂອງເຂື່ອນ ແມ່ນ ການຮັບປະກັນມາດຕະຖານທາງດ້ານເຕັກນິກ ກ່ຽວກັບ ການສຶກສາສຳຫຼວດ, ການອອກແບບ, ການກໍ່ສ້າງ ແລະ ການດຳເນີນງານຂອງເຂື່ອນ ແລະ ອ່າງເກັບນ້ຳ ໃຫ້ມີຄວາມປອດໄພ, ມີຄວາມທົນທານ, ໝັ້ນຄົງ, ປ້ອງກັນຜົນກະທົບດ້ານລົບຕໍ່ ຊີວິດ, ສຸຂະພາບ, ຊັບສິນຂອງພົນລະເມືອງ, ຂອງລັດ, ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເຂື່ອນ** ໝາຍເຖິງ ສິ່ງກໍ່ສ້າງທີ່ສ້າງດ້ວຍ ເຫຼັ້ງ, ຫີນ, ດິນ ແລະ/ຫຼື ວັດສະດຸອື່ນ ເພື່ອກັ້ນ, ກັກເກັບ, ລະບາຍນ້ຳ ຫຼື ອ່ວາຍນ້ຳ ເປັນຕົ້ນ ເຂື່ອນໄຟຟ້າ, ເຂື່ອນທາງແຮ່, ເຂື່ອນຊົນລະປະທານ, ເຂື່ອນນ້ຳປະປາ;

2. **ເຂື່ອນໄຟຟ້າ** ໝາຍເຖິງ ເຂື່ອນທີ່ກັ້ນ ແລະ ກັກເກັບນ້ຳ ເພື່ອສະໜອງນ້ຳ ໃຫ້ແກ່ການຜະລິດ ພະລັງງານໄຟຟ້າ;

3. **ເຂື່ອນທາງແຮ່** ໝາຍເຖິງ ເຂື່ອນທີ່ກັກເກັບນ້ຳ ແລະ ແຮ່ທາດ ທີ່ຕົກແຮ່ຍ, ເຈືອປົນກັບສິ່ງເສດເຫຼືອ ຊຶ່ງບໍ່ສາມາດເກັບກູ້ໄດ້ໝົດ ຈາກການຜະລິດ ແລະ ການລ້າງກັ່ນ;

4. **ເຂື່ອນຊົນລະປະທານ** ໝາຍເຖິງ ເຂື່ອນທີ່ຕັນແລວທາງນ້ຳ ເພື່ອຍົກລະດັບນ້ຳໃຫ້ສູງຂຶ້ນ ແນໃສ່ກັກນ້ຳ ເປັນອ່າງເກັບນ້ຳ ແລະ ອ່ວາຍນ້ຳເຂົ້າສູ່ການຜະລິດກະສິກຳ;

5. **ເຂື່ອນນ້ຳປະປາ** ໝາຍເຖິງ ເຂື່ອນທີ່ກັ້ນ ແລະ ກັກເກັບນ້ຳ ເພື່ອສະໜອງນ້ຳ ໃຫ້ແກ່ການຜະລິດນ້ຳປະປາ;

6. **ອຸບປະຕິເຫດຂອງເຂື່ອນ** ໝາຍເຖິງ ການລົ້ມເຫຼວຂອງໂຄງສ້າງໃດໜຶ່ງ ຫຼື ການດຳເນີນງານຂອງເຂື່ອນ ຊຶ່ງຈະນຳໄປສູ່ການໄຫຼຂອງນ້ຳ ອອກຈາກອ່າງເກັບນ້ຳ ໂດຍບໍ່ສາມາດຄວບຄຸມໄດ້ ເຮັດໃຫ້ເກີດນ້ຳຖ້ວມຢູ່ເບື້ອງລຸ່ມຂອງເຂື່ອນ, ສ້າງຜົນກະທົບດ້ານລົບຕໍ່ ຊີວິດ, ສຸຂະພາບ, ຊັບສິນ ຂອງພົນລະເມືອງ, ຂອງລັດ, ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;

7. **ເຂື່ອນທີ່ມີຄວາມສ່ຽງຕ່ຳ** ໝາຍເຖິງ ເຂື່ອນທີ່ມີຄວາມສູງຂອງໂຕເຂື່ອນ ຕ່ຳກວ່າ ສິບຫ້າແມັດ, ບໍລິມາດອ່າງເກັບນ້ຳ ຕ່ຳກວ່າ ໜຶ່ງແສນແມັດກ້ອນ, ບໍ່ມີປະຊາກອນອາໄສຢູ່ລຸ່ມເຂື່ອນ, ບໍ່ສ້າງຄວາມເສຍຫາຍຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;

8. **ເຂື່ອນທີ່ມີຄວາມສ່ຽງກາງ** ໝາຍເຖິງ ເຂື່ອນທີ່ມີຄວາມສູງຂອງໂຕເຂື່ອນ ແຕ່ ສິບຫ້າ ຫາ ສາມສິບ ແມັດ, ບໍລິມາດອ່າງເກັບນ້ຳ ແຕ່ ໜຶ່ງແສນ ຫາ ສາມລ້ານ ແມັດກ້ອນ, ມີປະຊາກອນອາໄສຢູ່ລຸ່ມເຂື່ອນ ທີ່ອາດຈະໄດ້ຮັບຜົນກະທົບ ແຕ່ ສິບຄົນ ລົງມາ, ສ້າງຄວາມເສຍຫາຍຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ຕ່ຳ;

9. **ເຂື່ອນທີ່ມີຄວາມສ່ຽງສູງ** ໝາຍເຖິງ ເຂື່ອນທີ່ມີຄວາມສູງຂອງໂຕເຂື່ອນ ຫຼາຍກວ່າ ສາມສິບ ຫາ ສີ່ສິບຫ້າ ແມັດ, ບໍລິມາດອ່າງເກັບນ້ຳ ຫຼາຍກວ່າ ສາມລ້ານ ຫາ ໜຶ່ງຮ້ອຍລ້ານ ແມັດກ້ອນ, ມີປະຊາກອນອາໄສຢູ່ລຸ່ມເຂື່ອນ ທີ່ອາດຈະໄດ້ຮັບຜົນກະທົບ ຫຼາຍກວ່າ ສິບຄົນ ຫາ ໜຶ່ງຮ້ອຍຄົນ, ສ້າງຄວາມເສຍຫາຍຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ປານກາງ;

10. **ເຂື່ອນທີ່ມີຄວາມສ່ຽງຮ້າຍແຮງ** ໝາຍເຖິງ ເຂື່ອນທີ່ມີຄວາມສູງຂອງໂຕເຂື່ອນ ຫຼາຍກວ່າ ສີ່ສິບຫ້າ ແມັດ, ບໍລິມາດອ່າງເກັບນ້ຳ ຫຼາຍກວ່າ ໜຶ່ງຮ້ອຍລ້ານ ແມັດກ້ອນ ຂຶ້ນໄປ, ມີປະຊາກອນອາໄສຢູ່ລຸ່ມເຂື່ອນ ທີ່ອາດຈະໄດ້ຮັບຜົນກະທົບ ຫຼາຍກວ່າ ໜຶ່ງຮ້ອຍຄົນ ຂຶ້ນໄປ, ສ້າງຄວາມເສຍຫາຍຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ສູງ ຫາ ຮ້າຍແຮງ;

11. **ອ່າງເກັບນ້ຳ** ໝາຍເຖິງ ພື້ນທີ່ເກີດຂຶ້ນຈາກການກໍ່ສ້າງເຂື່ອນ ແລະ ກໍ່ສ້າງໂຄງສ້າງອື່ນ ເພື່ອກັກເກັບນ້ຳ, ປ້ອງກັນໄພນ້ຳຖ້ວມ, ໄພແຫ້ງແລ້ງ, ຄົມມະນາຄົມ, ການທ່ອງທ່ຽວ, ການປະມົງ ແລະ ສະໜອງນ້ຳ ໃຫ້ແກ່ການຜະລິດພະລັງງານໄຟຟ້າ, ອຸດສາຫະກຳ, ກະສິກຳ, ສິ່ງແວດລ້ອມ ແລະ ການດຳລົງຊີວິດ.

12. **ຜູ້ທີ່ໄດ້ຮັບຜົນກະທົບ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບຜົນກະທົບໂດຍກົງ ແລະ ທາງອ້ອມທີ່ເກີດຈາກການກໍ່ສ້າງ, ການດຳເນີນງານ ແລະ ບຳລຸງຮັກສາເຂື່ອນ ແລະ ມີພູມລຳເນົາຢູ່ໃກ້ກັບເຂື່ອນ;

13. **ຜູ້ພັດທະນາເຂື່ອນ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເປັນເຈົ້າຂອງໂຄງການ ຫຼື ຜູ້ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການພັດທະນາເຂື່ອນ;

14. **ການພັດທະນາເຂື່ອນ** ໝາຍເຖິງ ການດຳເນີນການກ່ຽວກັບການສຶກສາຄວາມເປັນໄປໄດ້, ອອກແບບ, ກໍ່ສ້າງ, ດຳເນີນງານຂອງເຂື່ອນ ຈົນໄປເຖິງການຢຸດເຊົານຳໃຊ້ເຂື່ອນ;

15. **ເຈົ້າໜ້າທີ່ຄວາມປອດໄພຂອງເຂື່ອນ** ໝາຍເຖິງ ພະນັກງານ-ລັດຖະກອນ ທີ່ໄດ້ຮັບການແຕ່ງຕັ້ງຈາກຂະແໜງການທີ່ກ່ຽວຂ້ອງ ໃຫ້ໄປເຄື່ອນໄຫວ ແລະ ປະຕິບັດໜ້າທີ່ຢູ່ສະຖານທີ່ສະເພາະ ຫຼື ວຽກງານໃດໜຶ່ງກ່ຽວກັບຄວາມປອດໄພຂອງເຂື່ອນ;

16. **ຖານຂໍ້ມູນຄວາມປອດໄພຂອງເຂື່ອນ** ໝາຍເຖິງ ລະບົບເກັບຮັກສາຂໍ້ມູນ ທີ່ສັງລວມເອົາຂໍ້ມູນຍ່ອຍດ້ານຄວາມປອດໄພຂອງແຕ່ລະເຂື່ອນໄວ້ປ່ອນດຽວກັນ ຊຶ່ງເກັບຮັກສາໄວ້ຢູ່ຂະແໜງການທີ່ກ່ຽວຂ້ອງ;

17. **ເຂື່ອນຂັ້ນໄຕ** ໝາຍເຖິງ ບັນດາເຂື່ອນທີ່ຢູ່ໃນສາຍນ້ຳດຽວກັນ ຫຼື ອ່າຍນ້ຳມາໃສ່ກັນ ແຕ່ສອງເຂື່ອນຂຶ້ນໄປ.

ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຄວາມປອດໄພຂອງເຂື່ອນ

ລັດ ສົ່ງເສີມ ໃຫ້ຜູ້ພັດທະນາເຂື່ອນ ຖືເອົາວຽກງານຄວາມປອດໄພຂອງເຂື່ອນ ເປັນບຸລິມະສິດ ແລະ ສຳຄັນ ໃນການດຳເນີນກິດຈະການ ແລະ ທຸລະກິດກ່ຽວກັບເຂື່ອນ ໂດຍມີການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ແລະ ເປັນມິດກັບສິ່ງແວດລ້ອມ ພ້ອມທັງນຳໃຊ້ແຫຼ່ງຊັບພະຍາກອນທຳມະຊາດ ຢ່າງປະຢັດ, ມີປະສິດທິພາບ, ປະສິດທິຜົນ ຕາມທິດສີຂຽວ, ໝັ້ນຄົງ ແລະ ຍືນຍົງ.

ລັດ ຊຸກຍູ້, ສົ່ງເສີມ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລົງທຶນເຂົ້າໃນການພັດທະນາວຽກງານຄວາມປອດໄພຂອງເຂື່ອນ ແລະ ເຂົ້າຮ່ວມໃນການປົກປັກຮັກສາ ໃຫ້ມີຄວາມປອດໄພ ແລະ ຍືນຍົງ.

ລັດ ຊຸກຍູ້, ສົ່ງເສີມ ໃຫ້ຜູ້ພັດທະນາເຂື່ອນ ສ້າງ, ພັດທະນາຊັບພະຍາກອນມະນຸດ, ບຸກຄະລະກອນ ໃຫ້ເປັນມືອາຊີບ ແລະ ຊຳນານງານ.

ມາດຕາ 5 ຫຼັກການກ່ຽວກັບວຽກງານຄວາມປອດໄພຂອງເຂື່ອນ

ການເຄື່ອນໄຫວວຽກງານຄວາມປອດໄພຂອງເຂື່ອນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນແຕ່ລະໄລຍະ;

2. ຮັບປະກັນຄວາມຖືກຕ້ອງ ແລະ ສອດຄ່ອງກັບມາດຕະຖານເຕັກນິກ ແລະ ລະບຽບການ ກ່ຽວກັບ ການຄຸ້ມຄອງຄວາມປອດໄພຂອງເຂື່ອນ, ແຜນຮັບມືສຸກເສີນ, ມີຄວາມໂປ່ງໃສ, ສາມາດກວດສອບ ແລະ ກວດກາໄດ້;

3. ຮັບປະກັນການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນການສຳຫຼວດ, ອອກແບບ, ກໍ່ສ້າງ, ດຳເນີນງານ ແລະ ການຄຸ້ມຄອງຄວາມປອດໄພຂອງເຂື່ອນ;

4. ມີການຕິດຕາມ ກວດກາ, ເຝົ້າລະວັງ, ແຈ້ງເຕືອນ ແລະ ມີມາດຕະການແກ້ໄຂໃນກໍລະນີສຸກເສີນ ແລະ ອຸບປະຕິເຫດຂອງເຂື່ອນ ໃຫ້ທັນເວລາ;

5. ຮັບປະກັນການບໍລິຫານຈັດການນ້ຳ ໃຫ້ເປັນລະບົບ, ມີປະສິດທິພາບ ແລະ ປະສິດທິຜົນ;

6. ຮັບປະກັນການປະສານສົມທົບ ແລະ ມີສ່ວນຮ່ວມ ຂອງປະຊາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ມາດຕາ 6 ພັນທະກ່ຽວກັບວຽກງານຄວາມປອດໄພຂອງເຂື່ອນ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພັນທະປະກອບສ່ວນ ແລະ ມີສ່ວນຮ່ວມ ໃນວຽກງານຄວາມປອດໄພຂອງເຂື່ອນ ເປັນຕົ້ນ ການລາຍງານ, ການປ້ອງກັນ, ການສະໜອງຂໍ້ມູນ ຂ່າວສານ ກ່ຽວກັບຄວາມປອດໄພຂອງເຂື່ອນ, ບໍ່ສ້າງຜົນກະທົບຕໍ່ ສິ່ງແວດລ້ອມ ແລະ ຄວາມປອດໄພຂອງເຂື່ອນ ແນໃສ່ຮັບປະກັນໃຫ້ເຂື່ອນມີຄວາມປອດໄພ ແລະ ສາມາດນຳໃຊ້ຢ່າງຍາວນານ.

ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ ເຄື່ອນໄຫວ ແລະ ພົວພັນກັບວຽກງານຄວາມປອດໄພຂອງເຂື່ອນ.

ກົດໝາຍສະບັບນີ້ ນຳໃຊ້ສຳລັບເຂື່ອນ ທີ່ມີຄວາມສູງແຕ່ ຫ້າແມັດ ແລະ ມີບໍລິມາດອ່າງເກັບນ້ຳແຕ່ໜຶ່ງ ແສນແມັດກ້ອນ ຂຶ້ນໄປ. ສຳລັບເຂື່ອນ ທີ່ມີລວງສູງ ຕ່ຳກວ່າ ຫ້າແມັດ ແລະ ມີບໍລິມາດອ່າງເກັບນ້ຳຕ່ຳກວ່າ ໜຶ່ງ ແສນແມັດກ້ອນ ໃຫ້ປະຕິບັດຕາມລະບຽບການຕ່າງຫາກ.

ມາດຕາ 8 ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານ ຄວາມປອດໄພຂອງເຂື່ອນ ດ້ວຍການຄົ້ນຄວ້າຫາລື, ແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ພັດທະນາຊັບພະຍາ ກອນມະນຸດ, ເຕັກນິກ, ວິທະຍາສາດ, ເຕັກໂນໂລຊີ, ປະຕິບັດຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

ພາກທີ II
ຂະໜາດ ແລະ ປະເພດຄວາມສ່ຽງຂອງເຂື່ອນ

ມາດຕາ 9 ການຈັດຂະໜາດຂອງເຂື່ອນ

ຂະໜາດຂອງເຂື່ອນ ໃຫ້ຈັດຕາມຄວາມສູງຂອງເຂື່ອນ ແລະ ບໍລິມາດຂອງອ່າງເກັບນ້ຳ.

ເຂື່ອນ ມີ ສອງຂະໜາດ ຄື:

1. ເຂື່ອນຂະໜາດໃຫຍ່ ຊຶ່ງແມ່ນ ເຂື່ອນທີ່ມີຄວາມສູງ ແລະ ບໍລິມາດອ່າງເກັບນ້ຳ ຕາມແຕ່ລະກໍລະນີ ດັ່ງນີ້:

- ເຂື່ອນທີ່ມີຄວາມສູງ ແຕ່ ສິບຫ້າແມັດ ຂຶ້ນໄປ;
- ເຂື່ອນທີ່ມີຄວາມສູງ ຕ່ຳກວ່າ ສິບຫ້າແມັດ ແລະ ມີບໍລິມາດອ່າງເກັບນ້ຳ ແຕ່ ສາມລ້ານ ແມັດກ້ອນ ຂຶ້ນໄປ.

2. ເຂື່ອນຂະໜາດນ້ອຍ ຊຶ່ງແມ່ນ ເຂື່ອນທີ່ມີຄວາມສູງຕ່ຳກວ່າ ສິບຫ້າແມັດ ແລະ ບໍລິມາດອ່າງເກັບ ນ້ຳຕ່ຳກວ່າ ສາມລ້ານແມັດກ້ອນ.

ມາດຕາ 10 ການຈັດປະເພດຄວາມສ່ຽງຂອງເຂື່ອນ

ການຈັດປະເພດຄວາມສ່ຽງຂອງເຂື່ອນ ແມ່ນ ເພື່ອກຳນົດມາດຕະການ, ມາດຕະຖານ ໃນການສຶກສາ ສຳຫຼວດ, ອອກແບບ, ກໍ່ສ້າງ ແລະ ດຳເນີນງານຂອງເຂື່ອນ ເພື່ອຮັບປະກັນຄວາມປອດໄພ, ການຄຸ້ມຄອງ, ແບບ ແຜນການກວດກາ ແລະ ວາງແຜນຮັບມືກໍລະນີສຸກເສີນ.

ປະເພດຄວາມສ່ຽງຂອງເຂື່ອນ ໃຫ້ຈັດຕາມການປະເມີນປັດໄຈຄວາມສ່ຽງດ້ານ ຄວາມສູງຂອງໂຕເຂື່ອນ, ບໍລິມາດອ່າງເກັບນ້ຳ, ປະຊາກອນອາໄສຢູ່ລຸ່ມເຂື່ອນທີ່ມີຄວາມສ່ຽງ ແລະ ຜົນເສຍຫາຍດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ຊຶ່ງແບ່ງອອກເປັນ ສີ່ປະເພດ ດັ່ງນີ້:

1. ຄວາມສ່ຽງຕ່ຳ;
2. ຄວາມສ່ຽງກາງ;
3. ຄວາມສ່ຽງສູງ;
4. ຄວາມສ່ຽງຮ້າຍແຮງ.

ເງື່ອນໄຂໃນການຈັດປະເພດຄວາມສ່ຽງແຕ່ລະປະເພດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 11 ການຈົດທະບຽນຄວາມສ່ຽງຂອງເຂື່ອນ

ຜູ້ພັດທະນາເຂື່ອນ ຕ້ອງຈົດທະບຽນປະເພດຄວາມສ່ຽງຂອງເຂື່ອນທຸກຂະໜາດ ນຳຂະແໜງການທີ່ ກ່ຽວຂ້ອງ ພາຍໃນເວລາ ຫົກສິບວັນ ນັບແຕ່ວັນໄດ້ຮັບຮອງການອອກແບບພື້ນຖານ ເປັນຕົ້ນໄປ.

ສຳລັບເຂື່ອນທີ່ກໍ່ສ້າງສຳເລັດ ກ່ອນກົດໝາຍສະບັບນີ້ ໃຫ້ຜູ້ພັດທະນາເຂື່ອນ ຈົດທະບຽນປະເພດ ຄວາມສ່ຽງຂອງເຂື່ອນດັ່ງກ່າວ ນຳຂະແໜງການທີ່ກ່ຽວຂ້ອງ ພາຍໃນເວລາ ສິບສອງເດືອນ ນັບແຕ່ວັນທີ່ກົດໝາຍ ສະບັບນີ້ ມີຜົນສັກສິດ.

ໃບທະບຽນປະເພດຄວາມສ່ຽງ ມີອາຍຸການນຳໃຊ້ ຕາມແຕ່ລະປະເພດຄວາມສ່ຽງ ຊຶ່ງຜູ້ພັດທະນາເຂື່ອນ ຕ້ອງກວດກາຄວາມປອດໄພຂອງເຂື່ອນ ຢ່າງຮອບດ້ານຄືນ.

ລາຍລະອຽດຂອງການຈົດທະບຽນ, ການອອກໃບທະບຽນ ແລະ ອາຍຸຂອງໃບທະບຽນປະເພດຄວາມສ່ຽງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 12 ການຄຸ້ມຄອງປະເພດຄວາມສ່ຽງຂອງເຂື່ອນ

ການຄຸ້ມຄອງປະເພດຄວາມສ່ຽງຂອງເຂື່ອນ ໃຫ້ປະຕິບັດ ດັ່ງນີ້:

1. ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ ຄຸ້ມຄອງປະເພດຄວາມສ່ຽງຂອງເຂື່ອນທີ່ມີຄວາມສ່ຽງກາງຂຶ້ນໄປ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍມີການປະສານສົມທົບກັບກະຊວງ ແລະ ອົງການປົກຄອງຂັ້ນແຂວງ ທີ່ກ່ຽວຂ້ອງ;

2. ພະແນກພະລັງງານ ແລະ ບໍ່ແຮ່, ພະແນກກະສິກຳ ແລະ ປ່າໄມ້ ແລະ ພະແນກໂຍທາທິການ ແລະ ຂົນສົ່ງ ບ່ອນທີ່ມີເຂື່ອນຕັ້ງຢູ່ ຄຸ້ມຄອງປະເພດຄວາມສ່ຽງຂອງເຂື່ອນ ທີ່ມີຄວາມສ່ຽງຕ່ຳ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍມີການປະສານສົມທົບກັບ ພະແນກການ ແລະ ອົງການປົກຄອງຂັ້ນເມືອງ ທີ່ກ່ຽວຂ້ອງ.

ພາກທີ III
ການຄຸ້ມຄອງຄວາມປອດໄພຂອງເຂື່ອນ
ໝວດທີ 1
ການສຶກສາຄວາມເປັນໄປໄດ້ດ້ານເຕັກນິກ

ມາດຕາ 13 ການສຶກສາຄວາມເປັນໄປໄດ້ດ້ານເຕັກນິກ

ຜູ້ພັດທະນາເຂື່ອນ ເປັນຜູ້ຮັບຜິດຊອບໃນການສຳຫຼວດ, ເກັບກຳຂໍ້ມູນ, ຄົ້ນຄວ້າ ແລະ ວິໄຈຂໍ້ມູນຕົວຈິງ ຕາມຫຼັກວິສະວະກຳເຂື່ອນ, ດ້ານທໍລະນີສາດ, ທໍລະນີເຕັກນິກ, ແຜ່ນດິນໄຫວ, ອຸທົກກະສາດ ແລະ ພູມສັນຖານ ທີ່ນຳໃຊ້ເຂົ້າໃນການສຶກສາ ໂດຍມີການຄິດໄລ່, ວິເຄາະ ຢ່າງລະອຽດ, ຄົບຖ້ວນ ແລະ ຮອບດ້ານ ແລ້ວສ້າງບົດລາຍງານການສຶກສາຄວາມເປັນໄປໄດ້ດ້ານເຕັກນິກ ເພື່ອສະເໜີຂະແໜງການທີ່ກ່ຽວຂ້ອງພິຈາລະນາ.

ສຳລັບການສຶກສາຄວາມເປັນໄປໄດ້ດ້ານເຕັກນິກຂອງເຂື່ອນ ທີ່ຢູ່ສາຍນ້ຳທີ່ມີເຂື່ອນອື່ນຢູ່ແລ້ວ ຜູ້ພັດທະນາເຂື່ອນ ຕ້ອງປະຕິບັດ ດັ່ງນີ້:

1. ສຶກສາຄວາມເປັນໄປໄດ້ດ້ານເຕັກນິກ ສຳລັບການພັດທະນາເຂື່ອນທີ່ຢູ່ຕອນລຸ່ມ ໂດຍມີການອອກແບບທີ່ຮັບປະກັນຄວາມປອດໄພ ແລະ ສຶກສາຜົນກະທົບທີ່ອາດເກີດຈາກ ເຂື່ອນທີ່ມີຢູ່ແລ້ວ ແລະ ເຂື່ອນທີ່ກຳລັງຈະກໍ່ສ້າງ ທີ່ຢູ່ເທິງໂຄງການ;

2. ສຶກສາຄວາມເປັນໄປໄດ້ດ້ານເຕັກນິກ ສຳລັບການພັດທະນາເຂື່ອນທີ່ຢູ່ຕອນເທິງ ໂດຍມີການອອກແບບທີ່ຮັບປະກັນຄວາມປອດໄພ ແລະ ສຶກສາຜົນກະທົບທີ່ອາດເກີດຈາກການແຕກຜັງຂອງເຂື່ອນທີ່ຕົນພັດທະນາ ເພື່ອຮັບປະກັນການຮອງຮັບປະລິມານນ້ຳທີ່ໄຫຼລົງໄປໄດ້.

ຂັ້ນຕອນ ການຄິດໄລ່ ແລະ ສຶກສາຂໍ້ມູນ ສຳລັບການສຶກສາຄວາມເປັນໄປໄດ້ດ້ານເຕັກນິກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 14 ການຮັບຮອງການສຶກສາຄວາມເປັນໄປໄດ້ດ້ານເຕັກນິກ

ພາຍຫຼັງໄດ້ສຶກສາຄວາມເປັນໄປໄດ້ດ້ານເຕັກນິກແລ້ວ ຜູ້ພັດທະນາເຂື່ອນ ຕ້ອງເຮັດບົດລາຍງານ ສົ່ງໃຫ້ຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າພິຈາລະນາຮັບຮອງ ເມື່ອເຫັນວ່າການສຶກສາຄວາມເປັນໄປໄດ້ດ້ານເຕັກນິກນັ້ນ ຖືກຕ້ອງ, ສອດຄ່ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍສະບັບນີ້.

ໃນກໍລະນີ ເຫັນວ່າການສຶກສາຄວາມເປັນໄປໄດ້ດ້ານເຕັກນິກ ຍັງບໍ່ທັນວິເຄາະຢ່າງລະອຽດ ແລະ ຮອບດ້ານ ຂະແໜງການທີ່ກ່ຽວຂ້ອງ ຕ້ອງສົ່ງບົດລາຍງານດັ່ງກ່າວ ໃຫ້ຜູ້ພັດທະນາເຂື່ອນນຳໄປປັບປຸງແກ້ໄຂ ແລະ ສົ່ງບົດລາຍງານດັ່ງກ່າວ ໃຫ້ຂະແໜງການທີ່ກ່ຽວຂ້ອງ ຕາມເວລາທີ່ກຳນົດໄວ້.

ໃນການພິຈາລະນາຮັບຮອງ ຂະແໜງການທີ່ກ່ຽວຂ້ອງ ສາມາດລົງກວດກາພາກສະໜາມ ຫຼື ແຈ້ງໃຫ້ຜູ້ພັດທະນາເຂື່ອນສຳຫຼວດ ຫຼື ເກັບກຳຂໍ້ມູນເພີ່ມເຕີ່ມ ໃນກໍລະນີທີ່ເຫັນວ່າ ມີຄວາມຈຳເປັນ ເພື່ອຮັບປະກັນໃຫ້ການພິຈາລະນາຮັບຮອງ ມີຄວາມຖືກຕ້ອງ ແລະ ຄົບຖ້ວນ ພ້ອມທັງຮັບປະກັນຄວາມປອດໄພຂອງເຂື່ອນ ໂດຍແມ່ນຜູ້ພັດທະນາເຂື່ອນ ເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ.

ນອກຈາກການສ້າງບົດລາຍງານການສຶກສາຄວາມເປັນໄປໄດ້ດ້ານເຕັກນິກແລ້ວ ຜູ້ພັດທະນາເຂື່ອນ ຍັງຕ້ອງສົ່ງບົດລາຍງານກ່ຽວກັບການກະກຽມການອອກແບບເຂື່ອນ ໃຫ້ຂະແໜງການທີ່ກ່ຽວຂ້ອງອີກດ້ວຍ.

ໝວດທີ 2
ການອອກແບບ

ມາດຕາ 15 ການອອກແບບ ແລະ ການຮັບຮອງການອອກແບບ

ການອອກແບບໂຄງການເຂື່ອນ ປະກອບດ້ວຍ ການອອກແບບພື້ນຖານ, ການອອກແບບລະອຽດ ແລະ ການອອກແບບສຸດທ້າຍ ຊຶ່ງແຕ່ລະການອອກແບບຕ້ອງໄດ້ຮັບການຮັບຮອງຈາກຂະແໜງການກ່ຽວຂ້ອງ ດັ່ງນີ້:

1. ການອອກແບບໂຄງການ ເຂື່ອນໄຟຟ້າ ແລະ ເຂື່ອນທາງແຮ່ ຕ້ອງໄດ້ຮັບການຮັບຮອງຈາກຂະແໜງການພະລັງງານ ແລະ ບໍ່ແຮ່;

2. ການອອກແບບໂຄງການເຂື່ອນຊົນລະປະທານ ຕ້ອງໄດ້ຮັບການຮັບຮອງຈາກຂະແໜງການກະສິກຳ ແລະ ປ່າໄມ້;

3. ການອອກແບບໂຄງການເຂື່ອນນ້ຳປະປາ ຕ້ອງໄດ້ຮັບການຮັບຮອງຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ.

ສຳລັບການອອກແບບເຂື່ອນອື່ນ ກໍຕ້ອງໄດ້ຮັບການຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ.

ມາດຕາ 16 ການອອກແບບພື້ນຖານ

ຜູ້ພັດທະນາເຂື່ອນ ຕ້ອງດຳເນີນການອອກແບບພື້ນຖານ ພາຍຫຼັງບົດລາຍງານການສຶກສາຄວາມເປັນໄປໄດ້ດ້ານເຕັກນິກ ຜ່ານການຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ.

ໃນການດຳເນີນການອອກແບບພື້ນຖານ ຜູ້ພັດທະນາເຂື່ອນ ຕ້ອງປະຕິບັດຕາມໜ້າວຽກຂອງການອອກແບບພື້ນຖານ ເປັນຕົ້ນ ການສ້າງບົດລາຍງານລັກສະນະເບື້ອງຕົ້ນຂອງການອອກແບບ, ບົດລາຍງານມາດຕະຖານ ແລະ ຫຼັກການການອອກແບບ ແລະ ບົດລາຍງານການອອກແບບພື້ນຖານ.

ມາດຕາ 17 ການຮັບຮອງການອອກແບບພື້ນຖານ

ພາຍຫຼັງສຳເລັດການອອກແບບພື້ນຖານແລ້ວ ໃຫ້ຜູ້ພັດທະນາເຂື່ອນ ສົ່ງບົດລາຍງານການອອກແບບພື້ນຖານ ໃຫ້ຂະແໜງການທີ່ກ່ຽວຂ້ອງ ເພື່ອພິຈາລະນາຮັບຮອງ.

ສຳລັບຂັ້ນຕອນການຮັບຮອງການອອກແບບພື້ນຖານ ໄດ້ກຳນົດໄວ້ໃນບຽບການຕ່າງຫາກ.

ມາດຕາ 18 ການອອກແບບລະອຽດ

ພາຍຫຼັງການອອກແບບພື້ນຖານໄດ້ຮັບການຮັບຮອງແລ້ວ ຜູ້ພັດທະນາເຂື່ອນ ຕ້ອງດຳເນີນການອອກແບບລະອຽດ ຊຶ່ງແມ່ນວິສະວະກອນຝ່າຍຜູ້ພັດທະນາເຂື່ອນ ເປັນຜູ້ຮັບຜິດຊອບໃນການອອກແບບລະອຽດ ແລະ ກວດກາຢັ້ງຢືນການອອກແບບ ແລ້ວລາຍງານໃຫ້ຂະແໜງການທີ່ກ່ຽວຂ້ອງ ເພື່ອເປັນຂໍ້ມູນໃຫ້ແກ່ການກວດກາ.

ມາດຕາ 19 ແບບສຸດທ້າຍ

ພາຍຫຼັງສຳເລັດການກໍ່ສ້າງເຂື່ອນ ຜູ້ພັດທະນາເຂື່ອນ ຕ້ອງສ້າງແບບສຸດທ້າຍທີ່ຖືກຕ້ອງຕາມການກໍ່ສ້າງຕົວຈິງ ໂດຍມີການຢັ້ງຢືນຈາກວິສະວະກອນຝ່າຍຜູ້ພັດທະນາເຂື່ອນ ແລ້ວສົ່ງໃຫ້ຂະແໜງການທີ່ກ່ຽວຂ້ອງ ເພື່ອເກັບຮັກສາໄວ້ໃນລະບົບຂໍ້ມູນ.

ໝວດທີ 3
ການກໍ່ສ້າງເຂື່ອນ ແລະ ການກັກເກັບນ້ຳ

ມາດຕາ 20 ໜ້າວຽກທີ່ຕ້ອງສຳເລັດ ກ່ອນເລີ່ມການກໍ່ສ້າງເຂື່ອນ

ຜູ້ພັດທະນາເຂື່ອນ ຕ້ອງສຳເລັດໜ້າວຽກ ກ່ອນເລີ່ມການກໍ່ສ້າງເຂື່ອນ ດັ່ງນີ້:

1. ແຕ່ງຕັ້ງຫົວໜ້າວິສະວະກອນທີ່ຮັບຜິດຊອບໃນການກໍ່ສ້າງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 42 ຂອງກົດໝາຍສະບັບນີ້;
2. ການອອກແບບພື້ນຖານຖືກຮັບຮອງ;
3. ແຜນຮັບມືສຸກເສີນສຳລັບການກໍ່ສ້າງຖືກຮັບຮອງ;
4. ການອອກແບບລະອຽດ ຖືກຮັບຮອງຈາກວິສະວະກອນຝ່າຍຜູ້ພັດທະນາເຂື່ອນ;
5. ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມຖືກຮັບຮອງ;
6. ປະຕິບັດພັນທະຕາມສັນຍາ.

ມາດຕາ 21 ການກໍ່ສ້າງເຂື່ອນ

ໃນການກໍ່ສ້າງເຂື່ອນ ຜູ້ພັດທະນາເຂື່ອນ ຕ້ອງປະຕິບັດຕາມການອອກແບບທີ່ໄດ້ກຳນົດໄວ້ໃນມາດຕາ 17 ແລະ 18 ຂອງກົດໝາຍສະບັບນີ້, ມາດຕະຖານເຕັກນິກຂອງຂະແໜງການທີ່ກ່ຽວຂ້ອງ ຫຼື ມາດຕະຖານເຕັກນິກສາກົນທີ່ສູງກວ່າ ລວມທັງປະຕິບັດຕາມແຜນການກໍ່ສ້າງເຂື່ອນ ທີ່ຜ່ານການຮັບຮອງແລ້ວ.

ໃນການດຳເນີນການກໍ່ສ້າງຕົວຈິງ ຫາກເຫັນວ່າ ສະພາບທໍລະນີສາດສຳລັບການກໍ່ສ້າງເຂື່ອນ ມີຈຸດບົກຜ່ອງ, ມີຄວາມສ່ຽງ, ບໍ່ຮັບປະກັນດ້ານຄວາມປອດໄພ ຫຼື ບໍ່ໄດ້ມາດຕະຖານຕາມການອອກແບບ ໃຫ້ຜູ້ພັດທະນາເຂື່ອນ ຮີບຮ້ອນປັບປຸງແບບ ແລ້ວສົ່ງໃຫ້ຂະແໜງການທີ່ກ່ຽວຂ້ອງ ເພື່ອພິຈາລະນາຮັບຮອງຄືນໃໝ່.

ມາດຕາ 22 ການຕິດຕັ້ງອຸປະກອນຕິດຕາມເຂື່ອນ

ຜູ້ພັດທະນາເຂື່ອນ ຕ້ອງຕິດຕັ້ງອຸປະກອນຕິດຕາມເຂື່ອນ ໃຫ້ຖືກຕ້ອງຕາມແບບທີ່ໄດ້ກຳນົດໄວ້ໃນ ມາດຕາ 17 ແລະ 18 ຂອງກົດໝາຍສະບັບນີ້ ແລະ ໃຫ້ສອດຄ່ອງກັບມາດຕະຖານເຕັກນິກຂອງຂະແໜງການ ທີ່ກ່ຽວຂ້ອງ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນການຕິດຕັ້ງອຸປະກອນຕິດຕາມເຂື່ອນ ແລະ ລະບົບສື່ສານທີ່ຮັບໃຊ້ເຂົ້າໃນວຽກງານຄວາມປອດໄພຂອງເຂື່ອນ ໃຫ້ປະຕິບັດຕາມມາດຕະຖານເຕັກນິກ ຂອງຂະແໜງການທີ່ກ່ຽວຂ້ອງ ຫຼື ມາດຕະຖານສາກົນທີ່ສູງກວ່າ ຢ່າງເຂັ້ມງວດ.

ມາດຕາ 23 ແຜນຄຸ້ມຄອງຄຸນນະພາບການກໍ່ສ້າງເຂື່ອນ

ຜູ້ພັດທະນາເຂື່ອນ ຕ້ອງສ້າງແຜນຄຸ້ມຄອງຄຸນນະພາບກໍ່ສ້າງເຂື່ອນ ແລະ ສົ່ງແຜນດັ່ງກ່າວໃຫ້ຂະແໜງການທີ່ກ່ຽວຂ້ອງ. ໃນການດຳເນີນການກໍ່ສ້າງເຂື່ອນຕົວຈິງ ຜູ້ພັດທະນາເຂື່ອນ ຕ້ອງສ້າງຕັ້ງໜ່ວຍງານຄຸ້ມຄອງຄຸນນະພາບການກໍ່ສ້າງ, ວ່າຈ້າງວິສະວະກອນ ຮັບຜິດຊອບແຜນດັ່ງກ່າວ ໂດຍມີການຕິດຕາມ ກວດກາ ການຮັບປະກັນຄຸນນະພາບ ແລະ ການຄວບຄຸມຄຸນນະພາບ ໃນການຈັດຕັ້ງປະຕິບັດການກໍ່ສ້າງຕາມການອອກແບບ ເພື່ອຮັບປະກັນຄຸນນະພາບການກໍ່ສ້າງ ແລະ ໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກ.

ໃນການດຳເນີນການຕິດຕາມ ກວດກາ ຄຸນນະພາບການກໍ່ສ້າງ ຜູ້ພັດທະນາເຂື່ອນ ຕ້ອງຢັ້ງຢືນຜົນສຳເລັດການກວດກາຄຸນນະພາບການກໍ່ສ້າງ ເປັນລາຍລັກອັກສອນ ແລະ ສົ່ງໃຫ້ຂະແໜງການທີ່ກ່ຽວຂ້ອງເປັນແຕ່ລະໄລຍະ ເພື່ອເກັບຮັກສາໄວ້.

ລາຍລະອຽດກ່ຽວກັບການຄຸ້ມຄອງຄຸນນະພາບການກໍ່ສ້າງເຂື່ອນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 24 ໜ້າວຽກທີ່ຕ້ອງສຳເລັດ ກ່ອນການກັກເກັບນ້ຳ

ຜູ້ພັດທະນາເຂື່ອນ ຕ້ອງສຳເລັດໜ້າວຽກ ກ່ອນການກັກເກັບນ້ຳຕາມແຕ່ລະກໍລະນີ ດັ່ງນີ້:

1. ການກໍ່ສ້າງເຂື່ອນ;
2. ການອະນາໄມອ່າງກັກເກັບນ້ຳ;
3. ການຍົກຍ້າຍ, ຈັດສັນບ່ອນຢູ່ ແລະ ບ່ອນທຳການຜະລິດ ໃຫ້ປະຊາຊົນທີ່ອາໄສຢູ່ເຂດອ່າງເກັບນ້ຳ;
4. ການຝຶກອົບຮົມໃຫ້ພະນັກງານທີ່ຮັບຜິດຊອບການດຳເນີນງານຂອງເຂື່ອນ;
5. ການກວດກາຄວາມພ້ອມກ່ອນການກັກເກັບນ້ຳ;
6. ການສ້າງລະບົບຕິດຕໍ່ພົວພັນ ລະຫວ່າງພາກສ່ວນທີ່ກ່ຽວຂ້ອງ;
7. ແຜນຮັບມືສຸກເສີນສຳລັບການກັກເກັບນ້ຳຖືກຮັບຮອງ;
8. ການສ້າງ ແລະ ປັບປຸງໂຄງລ່າງພື້ນຖານ ທີ່ໄດ້ຮັບຜົນກະທົບ.

ມາດຕາ 25 ການອະນຸຍາດກັກເກັບນ້ຳ

ພາຍຫຼັງຜູ້ພັດທະນາເຂື່ອນໄດ້ສຳເລັດໜ້າວຽກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້ ໃຫ້ຜູ້ພັດທະນາເຂື່ອນ ຍື່ນຄຳຮ້ອງຂໍອະນຸຍາດກັກເກັບນ້ຳພ້ອມດ້ວຍເອກະສານ ໃຫ້ຂະແໜງການທີ່ກ່ຽວຂ້ອງ ຕາມລະບຽບການ.

ຂະແໜງການທີ່ກ່ຽວຂ້ອງ ພິຈາລະນາອະນຸຍາດກັກເກັບນ້ຳບົນພື້ນຖານການປະເມີນທາງດ້ານເຕັກນິກ ແລະ ດ້ານອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ໃບຢັ້ງຢືນດ້ານເຕັກນິກ, ໃບຢັ້ງຢືນດ້ານສິ່ງແວດລ້ອມ.

ມາດຕາ 26 ການກັກເກັບນ້ຳ

ໃນການກັກເກັບນ້ຳ ໃຫ້ຜູ້ພັດທະນາເຂື່ອນ ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ແຈ້ງການກ່ຽວກັບການເລີ່ມຕົ້ນກັກເກັບນ້ຳຕົວຈິງ ໄປຍັງຂະແໜງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ປະຊາຊົນຜູ້ຈະໄດ້ຮັບຜົນກະທົບ;

2. ສ້າງລະບຽບການກ່ຽວກັບຂັ້ນຕອນການກັກເກັບນ້ຳ;

3. ສ້າງແຜນການຕິດຕາມ ກວດກາ, ການເຝົ້າລະວັງ ເປັນແຕ່ລະໄລຍະ.

ລາຍລະອຽດ ກ່ຽວກັບຂັ້ນຕອນການກັກເກັບນ້ຳ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 27 ການຕິດຕາມ ກວດກາ ໃນໄລຍະການກັກເກັບນ້ຳ ແລະ ຫຼັງການກັກເກັບນ້ຳ

ໃນການຕິດຕາມ ກວດກາ ໃນໄລຍະການກັກເກັບນ້ຳ ໃຫ້ຜູ້ພັດທະນາເຂື່ອນ ເຝົ້າລະວັງ ແລະ ຕິດຕາມການກັກເກັບນ້ຳເຂົ້າອ່າງ ຢ່າງໃກ້ຊິດຕະຫຼອດ ຊາວສີ່ຊົ່ວໂມງ ພ້ອມທັງປະເມີນສະພາບໂຕເຂື່ອນ ແລະ ຮາກຖານຂອງເຂື່ອນ ຫຼັງການກັກເກັບນ້ຳເຂົ້າໃນອ່າງ ໂດຍມີການບັນທຶກລະອຽດເຂົ້າໃນບົດລາຍງານການກັກເກັບນ້ຳ.

ໃນກໍລະນີ ດຳເນີນການກັກເກັບນ້ຳໄປແລ້ວ ຫາກພົບວ່າມີຄວາມສ່ຽງ ຜູ້ພັດທະນາຕ້ອງຢຸດເຊົາການເກັບນ້ຳໃນທັນທີທັນໃດ ແລະ ລະບາຍນ້ຳອອກໃນທັນທີ ພ້ອມທັງຫາວິທີການແກ້ໄຂໂດຍດ່ວນ.

ລາຍລະອຽດກ່ຽວກັບ ການຕິດຕາມ ກວດກາ ໃນໄລຍະການກັກເກັບນ້ຳ ແລະ ຫຼັງການກັກເກັບນ້ຳ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 28 ການລາຍງານໃນໄລຍະການກັກເກັບນ້ຳ

ໃນໄລຍະການກັກເກັບນ້ຳ ໃຫ້ຜູ້ພັດທະນາເຂື່ອນ ລາຍງານໃຫ້ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດັ່ງນີ້:

1. ຂໍ້ມູນນ້ຳ, ສະພາບໂຕເຂື່ອນ ລວມທັງຄູກັນນ້ຳ, ຮາກຖານໂຕເຂື່ອນ ແລະ ພາກສ່ວນຕ່າງໆຂອງເຂື່ອນ ຢ່າງເປັນປົກກະຕິຕໍ່ເນື່ອງ;

2. ການຕິດຕາມ ກວດກາ ຄວາມປອດໄພຂອງເຂື່ອນ ໃນໄລຍະກ່ອນການກັກເກັບນ້ຳ, ການກັກເກັບນ້ຳຕົວຈິງ ແລະ ຫຼັງການກັກເກັບນ້ຳ;

3. ເຫດການທີ່ເກີດຂຶ້ນ ຢູ່ພາກສະໜາມ ທີ່ເຫັນວ່າ ຜິດປົກກະຕິ, ມີຄວາມສ່ຽງ ລວມທັງອຸບປະຕິເຫດທີ່ເກີດຂຶ້ນ ຢ່າງທັນການ ພ້ອມທັງວິທີການແກ້ໄຂທີ່ເໝາະສົມຕາມແຕ່ລະກໍລະນີໂດຍດ່ວນ.

ລາຍລະອຽດກ່ຽວກັບການລາຍງານໃນໄລຍະການກັກເກັບນ້ຳ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ໝວດທີ 4
ການດຳເນີນງານຂອງເຂື່ອນ

ມາດຕາ 29 ໜ້າວຽກທີ່ຕ້ອງສຳເລັດກ່ອນການດຳເນີນງານຂອງເຂື່ອນ

ຜູ້ພັດທະນາເຂື່ອນ ຕ້ອງສຳເລັດໜ້າວຽກກ່ອນການດຳເນີນງານ ຕາມແຕ່ລະກໍລະນີ ດັ່ງນີ້:

1. ແຕ່ງຕັ້ງຫົວໜ້າວິສະວະກອນທີ່ຮັບຜິດຊອບໃນການດຳເນີນງານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 42 ຂອງກົດໝາຍສະບັບນີ້;

2. ກໍ່ສ້າງເຂື່ອນ ແລະ ກັກເກັບນ້ຳ ຕາມທີ່ໄດ້ກຳນົດໄວ້ໃນໝວດທີ 3 ພາກທີ III ຂອງກົດໝາຍສະບັບນີ້;

3. ມີລະບຽບການບໍລິຫານຈັດການນ້ຳ ແລະ ແຜນຄຸ້ມຄອງນ້ຳນອງທີ່ຖືກຮັບຮອງໂດຍຂະແໜງການທີ່ກ່ຽວຂ້ອງ;

4. ມີແຜນເຝົ້າລະວັງ ແລະ ແຜນການຕິດຕາມ ກວດກາ;

5. ໄດ້ຮັບໃບຢັ້ງຢືນກ່ຽວກັບການສຳເລັດການກໍ່ສ້າງເຂື່ອນ;

6. ມີແຜນຮັບມືສຸກເສີນສຳລັບການດຳເນີນງານຖືກຮັບຮອງ;

7. ແຈ້ງການກ່ຽວກັບການດຳເນີນງານ ໄປຍັງຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ລວມທັງປະຊາຊົນຜູ້ໄດ້ຮັບຜົນກະທົບ.

ມາດຕາ 30 ການດຳເນີນງານຂອງເຂື່ອນ

ຜູ້ພັດທະນາເຂື່ອນ ຕ້ອງມີຫົວໜ້າວິສະວະກອນທີ່ຮັບຜິດຊອບໃນໄລຍະການດຳເນີນງານຂອງເຂື່ອນ ແລະ ຕ້ອງປະຕິບັດຕາມລະບຽບການ ວ່າດ້ວຍຄວາມປອດໄພໃນການດຳເນີນງານ ແລະ ການບຳລຸງຮັກສາ, ຄູ່ມືໃນການດຳເນີນງານ ແລະ ບຳລຸງຮັກສາ, ຄຳແນະນຳວ່າດ້ວຍຄວາມປອດໄພຂອງເຂື່ອນ ແລະ ລາຍງານໃຫ້ຂະແໜງການທີ່ກ່ຽວຂ້ອງ ຕາມລະບຽບການ.

ມາດຕາ 31 ການຕິດຕາມ ກວດກາ ແລະ ການເຝົ້າລະວັງໃນໄລຍະດຳເນີນງານ

ຜູ້ພັດທະນາເຂື່ອນ ຕ້ອງມີແຜນການຕິດຕາມ ກວດກາ ແລະ ການເຝົ້າລະວັງໃນໄລຍະການດຳເນີນງານຂອງເຂື່ອນຢ່າງຮອບດ້ານ ເພື່ອໃຫ້ສາມາດປະເມີນສະພາບຂອງເຂື່ອນ ແລະ ແກ້ໄຂບັນຫາທີ່ອາດເກີດຂຶ້ນໄດ້ຢ່າງທັນການ.

ລາຍລະອຽດກ່ຽວກັບ ການຕິດຕາມ ກວດກາ ແລະ ການເຝົ້າລະວັງ ໃນໄລຍະດຳເນີນງານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 32 ການບໍລິຫານຈັດການນ້ຳ ໃນໄລຍະການດຳເນີນງານ

ຜູ້ພັດທະນາເຂື່ອນ ຕ້ອງມີລະບຽບການກ່ຽວກັບການບໍລິຫານຈັດການນ້ຳ ຕາມແຕ່ລະປະເພດອ່າງເກັບນ້ຳຂອງເຂື່ອນ, ມີການແລກປ່ຽນຂໍ້ມູນ ຂ່າວສານ ແລະ ມີການປະສານສົມທົບກັນ ເພື່ອໃຫ້ເກີດຜົນປະໂຫຍດສູງສຸດທາງດ້ານເສດຖະກິດ ໃນໄລຍະການດຳເນີນງານຂອງເຂື່ອນ ແລະ ການຄຸ້ມຄອງຄວາມປອດໄພຂອງເຂື່ອນ.

ໃນການບໍລິຫານຈັດການນ້ຳ ຜູ້ພັດທະນາເຂື່ອນ ຕ້ອງຄວບຄຸມນ້ຳນອງ, ສະໜອງນ້ຳ, ປ້ອງກັນໄພແຫ້ງແລ້ງ, ຄວບຄຸມຄຸນນະພາບນ້ຳ, ແຈ້ງການລ່ວງໜ້າ ກ່ຽວກັບການກັກເກັບນ້ຳ ແລະ ການປ່ອຍນ້ຳ ໄປຍັງຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ, ຜູ້ພັດທະນາເຂື່ອນທີ່ຢູ່ຕອນລຸ່ມຂອງສາຍນ້ຳດຽວກັນ ແລະ ປະຊາຊົນຜູ້ທີ່ຢູ່ຕອນລຸ່ມຂອງສາຍນ້ຳດັ່ງກ່າວຢ່າງທັນການ ເພື່ອຫຼຸດຜ່ອນຜົນກະທົບທີ່ອາດເກີດຂຶ້ນ.

ມາດຕາ 33 ການຢຸດເຊົາການດຳເນີນງານ

ການດຳເນີນງານຂອງເຂື່ອນ ຈະຖືກຢຸດເຊົາ ຕາມແຕ່ລະກໍລະນີ ດັ່ງນີ້:

1. ເຂື່ອນບໍ່ຮັບປະກັນດ້ານຄວາມປອດໄພ;

2. ເຂື່ອນສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ຢ່າງຮ້າຍແຮງ;

3. ຜູ້ພັດທະນາເຂື່ອນ ບໍ່ສາມາດສ້ອມແປງ ຫຼື ຟື້ນຟູເຂື່ອນ ທີ່ໄດ້ຮັບຄວາມເສຍຫາຍຈາກເຫດສຸດວິໄສ;

4. ເຂື່ອນທີ່ບໍ່ສາມາດນຳໃຊ້ຕໍ່ໄປໄດ້.

ສຳລັບການຢຸດເຊົາການດຳເນີນງານຂອງເຂື່ອນໃນກໍລະນີທີ 1 ຫາ 3 ໃຫ້ຂະແໜງການທີ່ກ່ຽວຂ້ອງ ເປັນຜູ້ອອກຄຳສັ່ງໃຫ້ຢຸດເຊົາການດຳເນີນງານຂອງເຂື່ອນ ຕາມລະບຽບການ.

ໃນການຢຸດເຊົາການດຳເນີນງານເຂື່ອນ ທຸກກໍລະນີໃຫ້ຜູ້ພັດທະນາເຂື່ອນ ແຈ້ງຫາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງເປັນລາຍລັກອັກສອນ ເພື່ອພິຈາລະນາ ແລະ ກຳນົດວິທີການ ຫຼຸດຜ່ອນຜົນກະທົບທີ່ອາດເກີດຂຶ້ນ.

ມາດຕາ 34 ການເຂົ້າເຖິງເຂື່ອນ

ຜູ້ພັດທະນາເຂື່ອນ ຕ້ອງສົມທົບກັບຂະແໜງການທີ່ກ່ຽວຂ້ອງໃນການວາງແຜນ, ອອກແບບ, ກໍ່ສ້າງ ແລະ ສ້ອມແປງ ເສັ້ນທາງ, ທາງເຮືອ ຫຼື ສະຖານທີ່ຈອດເຮືອບິນ ໃຫ້ຢູ່ໃນສະພາບທີ່ດີ ແລະ ສາມາດໃຊ້ງານສຳລັບການເຂົ້າເຖິງເຂື່ອນ ແລະ ພາກສ່ວນຕ່າງໆຂອງເຂື່ອນ ໄດ້ໃນທຸກກໍລະນີ ຕະຫຼອດອາຍຸການນຳໃຊ້ງານຂອງເຂື່ອນ.

ມາດຕາ 35 ການລາຍງານ

ຜູ້ພັດທະນາເຂື່ອນ ຕ້ອງລາຍງານໃຫ້ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ດັ່ງນີ້:

1. ສະພາບການຄຸ້ມຄອງນ້ຳ, ການສະໜອງນ້ຳ ແລະ ການຜະລິດ;
2. ການຕິດຕາມ ກວດກາ ຄວາມປອດໄພຂອງເຂື່ອນ ແລະ ພາກສ່ວນຕ່າງໆຂອງເຂື່ອນ;
3. ທຸກປາກົດການ ແລະ ອຸບປະຕິເຫດທີ່ເກີດຂຶ້ນ ຢູ່ພາກສະໜາມ ທີ່ເຫັນວ່າຜິດປົກກະຕິ ແລະ ມີຄວາມສ່ຽງ.

ລາຍລະອຽດກ່ຽວກັບຂັ້ນຕອນ ແລະ ເນື້ອໃນ ການລາຍງານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 36 ການສະໜອງ ແລະ ການເກັບຮັກສາເອກະສານ

ຜູ້ພັດທະນາເຂື່ອນ ຕ້ອງສ້າງລວມຂໍ້ມູນ, ເອກະສານ, ຮູບຖ່າຍ ແລະ ວິດີໂອກ່ຽວກັບເຂື່ອນ ໃນແຕ່ລະໄລຍະຂອງການພັດທະນາເຂື່ອນ ເປັນຕົ້ນ ໄລຍະສຳຫຼວດ, ອອກແບບ, ກໍ່ສ້າງ, ທົດສອບ ແລະ ທົດລອງ, ການດຳເນີນງານ ແລະ ບຳລຸງຮັກສາ ເພື່ອສ້າງເປັນລະບົບຖານຂໍ້ມູນຂອງເຂື່ອນ ໃນຮູບແບບເຈ້ຍ ແລະ ຮູບແບບເອເລັກໂຕຣນິກ ແລ້ວສົ່ງໃຫ້ຂະແໜງການທີ່ກ່ຽວຂ້ອງ ເພື່ອເກັບຮັກສາໄວ້ໃນລະບົບຖານຂໍ້ມູນ.

ລາຍການເອກະສານ ສຳລັບແຕ່ລະໄລຍະຂອງການພັດທະນາເຂື່ອນ, ຂັ້ນຕອນ, ວິທີການເກັບຮັກສາຂໍ້ມູນ, ເອກະສານ, ຮູບຖ່າຍ ແລະ ວິດີໂອ ກ່ຽວກັບເຂື່ອນ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

ມາດຕາ 37 ການຕັ້ງສະຖານີອຸທົກກະສາດຂອງເຂື່ອນ

ຜູ້ພັດທະນາເຂື່ອນ ຕ້ອງຕັ້ງສະຖານີອຸທົກກະສາດຂອງເຂື່ອນ ສຳລັບຕິດຕາມ, ເກັບກຳ ແລະ ແລກປ່ຽນຂໍ້ມູນກ່ຽວກັບ ປະລິມານນ້ຳໄຫຼ, ລະດັບນ້ຳ ແລະ ປະລິມານນ້ຳຝົນ ລວມທັງຂໍ້ມູນອື່ນທີ່ກ່ຽວຂ້ອງ ເພື່ອໃຫ້ສາມາດນຳໃຊ້ຊັບພະຍາກອນນ້ຳ ຢ່າງມີປະສິດທິພາບ ແລະ ປອດໄພ.

ສຳລັບຕອນເທິງຂອງເຂື່ອນ ໃຫ້ຜູ້ພັດທະນາເຂື່ອນ ຕັ້ງສະຖານີອຸທົກກະສາດຂອງເຂື່ອນ ຢ່າງໜ້ອຍສາມສະຖານີ, ສ່ວນຕອນລຸ່ມເຂື່ອນ ຫຼື ທ້າຍເຮືອນຈັກ ໃຫ້ຕັ້ງສະຖານີອຸທົກກະສາດຂອງເຂື່ອນ ຢ່າງໜ້ອຍສອງສະຖານີ. ໃນກໍລະນີມີຫຼາຍເຂື່ອນ ຢູ່ໃນສາຍນ້ຳດຽວກັນ ໃຫ້ຜູ້ພັດທະນາເຂື່ອນ ແລກປ່ຽນຂໍ້ມູນກ່ຽວກັບປະລິມານນ້ຳໄຫຼ, ລະດັບນ້ຳ ແລະ ປະລິມານນ້ຳຝົນ ລວມທັງຂໍ້ມູນອື່ນທີ່ກ່ຽວຂ້ອງ ກັບຜູ້ພັດທະນາເຂື່ອນທີ່ຢູ່ໃກ້ຄຽງ.

ລາຍລະອຽດກ່ຽວກັບການຕັ້ງສະຖານີອຸທົກກະສາດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 38 ການນຳໃຊ້ນ້ຳຮ່ວມກັນຂອງເຂື່ອນຂັ້ນໄດ

ຜູ້ພັດທະນາເຂື່ອນ ທີ່ມີເຂື່ອນຢູ່ໃນເງື່ອນໄຂຂອງເຂື່ອນຂັ້ນໄດ ແລະ ຢູ່ອ່າງຮັບນ້ຳດຽວກັນ ຕ້ອງຮ່ວມມື ແລະ ຂຶ້ນແຜນນຳໃຊ້ນ້ຳຮ່ວມກັນ, ແລກປ່ຽນຂໍ້ມູນ ຂ່າວສານ ກ່ຽວກັບອຸທົກກະສາດຂອງເຂື່ອນ ແລະ ປະສານສົມທົບກັນໃນການພັດທະນາເຂື່ອນຕົວຈິງ ເພື່ອຫຼີກລ່ຽງຜົນກະທົບຊຶ່ງກັນ ແລະ ກັນ ແລະ ໃຫ້ໄດ້ຜົນປະໂຫຍດສູງສຸດຈາກການນຳໃຊ້ນ້ຳ.

ລາຍລະອຽດກ່ຽວກັບການນຳໃຊ້ນ້ຳຮ່ວມກັນຂອງເຂື່ອນຂັ້ນໄດ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

ມາດຕາ 39 ການບໍລິຫານຈັດການນ້ຳຂອງເຂື່ອນໃນສາຍນ້ຳດຽວກັນ

ຜູ້ພັດທະນາເຂື່ອນ ທີ່ມີເຂື່ອນຢູ່ໃນສາຍນ້ຳດຽວກັນ ຕ້ອງບໍລິຫານຈັດການນ້ຳຮ່ວມກັນ ເພື່ອໃຫ້ໄດ້ຮັບຜົນປະໂຫຍດສູງສຸດຮ່ວມກັນ ແລະ ຫຼີກລ່ຽງຜົນກະທົບຕໍ່ຄວາມປອດໄພຂອງເຂື່ອນ.

ໃນການດຳເນີນງານ ແລະ ການນຳໃຊ້ນ້ຳຂອງແຕ່ລະເຂື່ອນໃນສາຍນ້ຳດຽວກັນ ຜູ້ພັດທະນາເຂື່ອນຕ້ອງແລກປ່ຽນຂໍ້ມູນ ຂ່າວສານ, ສ້າງກົນໄກການປະສານງານ, ກົນໄກການເຮັດວຽກຮ່ວມກັນ ສຳລັບການບໍລິຫານຈັດການນ້ຳ ລວມທັງການສຶກສາສ້າງແຜນຮັບມືສຸກເສີນສຳລັບກໍລະນີເຂື່ອນແຕກພັງ. ຜູ້ພັດທະນາເຂື່ອນຕ້ອງດຳເນີນການສຶກສາຢ່າງເປັນລະບົບ ເພື່ອຫຼີກເວັ້ນຜົນກະທົບຕໍ່ພາກສ່ວນອື່ນ.

ຜູ້ພັດທະນາເຂື່ອນ ຫາກສ້າງຄວາມເສຍຫາຍໃຫ້ແກ່ເຂື່ອນອື່ນ ແລະ ເປັນສາເຫດເຮັດໃຫ້ມີຜົນກະທົບ ແລະ ສ້າງຄວາມເສຍຫາຍຕໍ່ ຊີວິດ, ຊັບສິນ, ສິ່ງແວດລ້ອມ ຜູ້ພັດທະນາເຂື່ອນດັ່ງກ່າວ ຕ້ອງຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນທັງໝົດ.

ມາດຕາ 40 ການແຈ້ງເຕືອນລ່ວງໜ້າ ໃນການກັກເກັບນ້ຳ ແລະ ປ່ອຍນ້ຳ

ຜູ້ພັດທະນາເຂື່ອນ ຕ້ອງແຈ້ງເຕືອນລ່ວງໜ້າໄປຍັງຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ລວມທັງປະຊາຊົນຜູ້ຈະໄດ້ຮັບຜົນກະທົບ ຢ່າງໜ້ອຍ ເຈັດວັນ ກ່ອນການກັກເກັບນ້ຳ ແລະ ປ່ອຍນ້ຳ.

ລາຍລະອຽດກ່ຽວກັບການແຈ້ງເຕືອນລ່ວງໜ້າ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 41 ການປັບປຸງ ແລະ ການຂະຫຍາຍເຂື່ອນ

ໃນການປັບປຸງ ແລະ ການຂະຫຍາຍເຂື່ອນ ຜູ້ພັດທະນາເຂື່ອນ ຕ້ອງປະຕິບັດຕາມຂັ້ນຕອນກ່ຽວກັບການສຶກສາຄວາມເປັນໄປໄດ້ດ້ານເຕັກນິກ, ການອອກແບບ ແລະ ການກໍ່ສ້າງເຂື່ອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

ໝວດທີ 5
ວິສະວະກອນ

ມາດຕາ 42 ວິສະວະກອນ

ໃນການພັດທະນາເຂື່ອນ ມີວິສະວະກອນ ສອງປະເພດ ດັ່ງນີ້:

1. ວິສະວະກອນຝ່າຍຜູ້ພັດທະນາເຂື່ອນ;
2. ວິສະວະກອນຝ່າຍລັດ.

ມາດຕາ 43 ວິສະວະກອນຝ່າຍຜູ້ພັດທະນາເຂື່ອນ

ວິສະວະກອນຝ່າຍຜູ້ພັດທະນາເຂື່ອນ ແມ່ນ ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບການຄັດເລືອກໂດຍຜູ້ພັດທະນາເຂື່ອນ ໃຫ້ເປັນຜູ້ຮັບຜິດຊອບທັງໝົດຕໍ່ ການອອກແບບ, ການກໍ່ສ້າງ ແລະ ການດຳເນີນງານຂອງເຂື່ອນ. ໃນນັ້ນໃຫ້ແຕ່ງຕັ້ງຜູ້ໜຶ່ງ ເປັນຫົວໜ້າວິສະວະກອນ ແລ້ວສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງພິຈາລະນາຮັບຮອງ.

ເງື່ອນໄຂການຄັດເລືອກວິສະວະກອນ ແລະ ແຕ່ງຕັ້ງຫົວໜ້າວິສະວະກອນຝ່າຍຜູ້ພັດທະນາເຂື່ອນ ໄດ້ ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 44 ວິສະວະກອນຝ່າຍລັດ

ວິສະວະກອນຝ່າຍລັດ ແມ່ນ ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບການຄັດເລືອກ ແລະ ແຕ່ງຕັ້ງ ໃຫ້ເປັນທີ່ ປຶກສາຝ່າຍລັດ ໃນການກວດສອບ ແລະ ກວດກາ ການອອກແບບ, ການກໍ່ສ້າງ ແລະ ການດຳເນີນງານຂອງເຂື່ອນ.

ຂະແໜງການທີ່ກ່ຽວຂ້ອງ ຄັດເລືອກວິສະວະກອນຝ່າຍລັດ ຜູ້ມີມາດຕະຖານ ແລະ ເງື່ອນໄຂ ໂດຍ ໃຫ້ບຸລິມະສິດແກ່ບຸກຄົນທີ່ເປັນພົນລະເມືອງລາວ ຫຼື ນິຕິບຸກຄົນ ພາຍໃນຂອງ ສປປ ລາວ ໃນກໍລະນີຈຳເປັນ ກໍ ສາມາດຄັດເລືອກວິສະວະກອນທີ່ເປັນ ບຸກຄົນ ຫຼື ນິຕິບຸກຄົນຕ່າງປະເທດໄດ້.

ມາດຕະຖານ ແລະ ເງື່ອນໄຂ ໃນການຄັດເລືອກວິສະວະກອນຝ່າຍລັດ ໄດ້ກຳນົດໄວ້ໃນລະບຽບການ ຕ່າງຫາກ.

ພາກທີ IV
ແຜນຮັບມືສຸກເສີນ
ໝວດທີ 1
ການສ້າງ ແລະ ຮັບຮອງ ແຜນຮັບມືສຸກເສີນ

ມາດຕາ 45 ການສ້າງແຜນຮັບມືສຸກເສີນ

ຜູ້ພັດທະນາເຂື່ອນ ຕ້ອງສ້າງແຜນຮັບມືສຸກເສີນ ສາມສະບັບ ດັ່ງນີ້:

1. ແຜນຮັບມືສຸກເສີນສຳລັບການກໍ່ສ້າງ;
2. ແຜນຮັບມືສຸກເສີນສຳລັບການກັກເກັບນ້ຳ;
3. ແຜນຮັບມືສຸກເສີນສຳລັບການດຳເນີນງານຂອງເຂື່ອນ.

ຜູ້ພັດທະນາເຂື່ອນ ຕ້ອງເອົາແຜນຮັບມືສຸກເສີນໄປທາບທາມຄຳເຫັນນຳພາກສ່ວນທີ່ກ່ຽວຂ້ອງ ພາຍ ຫຼັງສຳເລັດການສ້າງແຜນຮັບມືສຸກເສີນ ແລະ ນຳສະເໜີຂໍການພິຈາລະນາຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ ກ່ອນການກໍ່ສ້າງ, ການກັກເກັບນ້ຳ ແລະ ການດຳເນີນງານຂອງເຂື່ອນ.

ມາດຕາ 46 ເນື້ອໃນຂອງແຜນຮັບມືສຸກເສີນ

ແຜນຮັບມືສຸກເສີນ ປະກອບດ້ວຍເນື້ອໃນ ດັ່ງນີ້:

1. ປະເພດ ແລະ ລະດັບເຫດສຸກເສີນ ພ້ອມດ້ວຍວິທີການປ້ອງກັນ ແລະ ແກ້ໄຂເຫດສຸກເສີນ;
2. ບັນຊີລາຍຊື່ ບ້ານ, ເມືອງ, ເຫດສະບານ, ນະຄອນ ແລະ ແຂວງ, ນະຄອນຫຼວງ ພ້ອມດ້ວຍເບີ ໂທລະສັບຕິດຕໍ່ທີ່ສາມາດແຈ້ງເຕືອນ ໃນເວລາເກີດເຫດສຸກເສີນ;
3. ບັນຊີລາຍຊື່ຜູ້ຈະໄດ້ຮັບຜົນກະທົບຢູ່ເຂດຕອນເທິງເຂື່ອນ ຫຼື ເຂດຕອນລຸ່ມເຂື່ອນ ໃນເວລາເກີດ ເຫດສຸກເສີນ;

4. ລາຍຊື່ ແລະ ເບີໂທລະສັບຕິດຕໍ່ພົວພັນ ກັບພາກສ່ວນທີ່ກ່ຽວຂ້ອງຂອງຜູ້ພັດທະນາເຂື່ອນ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

5. ເວລາ ແລະ ກໍລະນີທີ່ຕ້ອງໄດ້ຕິດຕໍ່ ແລະ ແຈ້ງເຫດສຸກເສີນ ຕໍ່ຜູ້ພັດທະນາເຂື່ອນ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

6. ຂໍ້ຄວາມທີ່ໃຊ້ໃນການແຈ້ງເຕືອນລ່ວງໜ້າ ຕໍ່ຜູ້ພັດທະນາເຂື່ອນ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

7. ລະບົບ, ປະເພດ ແລະ ຊະນິດ ວັດຖຸປະກອນທີ່ນຳໃຊ້ສຳລັບການແຈ້ງເຕືອນປະຊາຊົນ ທີ່ຈະໄດ້ຮັບຜົນກະທົບ;

8. ບັນຊີບຸກຄະລາກອນ, ເຄື່ອງມື, ອຸປະກອນ, ຍານພາຫະນະຂົນສົ່ງ ແລະ ສິ່ງອຳນວຍຄວາມສະດວກໃນການແກ້ໄຂ ແລະ ຊ່ວຍເຫຼືອ ເປັນຕົ້ນ ອາຫານ, ນ້ຳດື່ມ, ເຄື່ອງນຸ່ງຫົ່ມ, ການບໍລິການແພດສຸກເສີນ ໃນເວລາເກີດເຫດສຸກເສີນ;

9. ຈຸດທີ່ຕັ້ງ ແລະ ສະຖານທີ່ ທີ່ນຳໃຊ້ເປັນຈຸດເຕົ້າໂຮມ ແລະ ສະຖານທີ່ພັກພາອາໄສຊົ່ວຄາວ ຊຶ່ງເປັນບ່ອນທີ່ສູງ ແລະ ນ້ຳບໍ່ສາມາດຖ້ວມໄດ້;

10. ມາດຕະການ ແລະ ຂັ້ນຕອນ ສຳລັບການປ້ອງກັນບໍ່ໃຫ້ຜົນກະທົບ ແຜ່ລາມເປັນວົງກວ້າງ ແລະ ຂ້າມຊາຍແດນ;

11. ແຜນທີ່ ເຂດ ແລະ ລະດັບນ້ຳຖ້ວມ ທີ່ຄາດຄະເນຈະໄດ້ຮັບຜົນກະທົບ ລວມທັງການກຳນົດຮູບແບບຈຳລອງເຫດສຸກເສີນ;

12. ຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນຮັບມືສຸກເສີນ ຂອງແຕ່ລະພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ ຜູ້ພັດທະນາເຂື່ອນ, ຜູ້ຈະໄດ້ຮັບຜົນກະທົບ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

13. ບາດກ້າວ ແລະ ຂັ້ນຕອນ ສຳລັບການປະຕິບັດແຜນຮັບມືສຸກເສີນ;

14. ເນື້ອໃນອື່ນ ຕາມການກຳນົດຂອງຂະແໜງການທີ່ກ່ຽວຂ້ອງ.

ມາດຕາ 47 ການຮັບຮອງແຜນຮັບມືສຸກເສີນ

ພາຍຫຼັງສຳເລັດການສ້າງແຜນຮັບມືສຸກເສີນແລ້ວ ໃຫ້ຜູ້ພັດທະນາເຂື່ອນສົ່ງແຜນຮັບມືສຸກເສີນ ໄປຍັງຂະແໜງການທີ່ກ່ຽວຂ້ອງ ເພື່ອພິຈາລະນາຮັບຮອງ.

ຂະແໜງການທີ່ກ່ຽວຂ້ອງ ຕ້ອງໃຫ້ຄຳແນະນຳ, ປຶກສາຫາລືກັບຜູ້ພັດທະນາເຂື່ອນ ກ່ຽວກັບແຜນຮັບມືສຸກເສີນ. ໃນກໍລະນີເຫັນວ່າ ບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບ ລະບຽບການ, ມາດຕະຖານທີ່ກ່ຽວຂ້ອງ ແລ້ວຂະແໜງການທີ່ກ່ຽວຂ້ອງ ຕ້ອງແນະນຳ ແລະ ມີຄຳເຫັນ ພ້ອມທັງແຈ້ງໃຫ້ຜູ້ພັດທະນາເຂື່ອນ ປັບປຸງ, ແກ້ໄຂ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບການແຈ້ງ ເປັນຕົ້ນໄປ.

ພາຍຫຼັງແຜນຮັບມືສຸກເສີນໄດ້ຮັບການຮັບຮອງແລ້ວ ຜູ້ພັດທະນາເຂື່ອນ ຕ້ອງເຜີຍແຜ່ແຜນຮັບມືສຸກເສີນ ແລະ ສາມາດດຳເນີນການກໍ່ສ້າງ, ການກັກເກັບນ້ຳ ແລະ ການດຳເນີນງານ ຕາມແຕ່ລະກໍລະນີ.

ມາດຕາ 48 ການປັບປຸງແຜນຮັບມືສຸກເສີນ

ໃນໄລຍະການດຳເນີນການກໍ່ສ້າງ, ການກັກເກັບນ້ຳ ແລະ ການດຳເນີນງານຂອງເຂື່ອນ ຫາກເຫັນວ່າ ແຜນຮັບມືສຸກເສີນມີເນື້ອໃນບໍ່ສອດຄ່ອງ ຜູ້ພັດທະນາເຂື່ອນ ຕ້ອງປັບປຸງແຜນຮັບມືສຸກເສີນແລ້ວ ສົ່ງໃຫ້ຂະແໜງການທີ່ກ່ຽວຂ້ອງ ພິຈາລະນາຮັບຮອງຄືນໃໝ່.

ຂັ້ນຕອນ ແລະ ເນື້ອໃນລະອຽດ ຂອງການປັບປຸງແຜນຮັບມືສຸກເສີນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ໝວດທີ 2
ການຝຶກຊ້ອມ ແລະ ການຈັດຕັ້ງປະຕິບັດ ແຜນຮັບມືສຸກເສີນ

ມາດຕາ 49 ການຝຶກຊ້ອມແຜນຮັບມືສຸກເສີນ

ພາຍຫຼັງແຜນຮັບມືສຸກເສີນ ໄດ້ຮັບການຮັບຮອງແລ້ວ ໃຫ້ຜູ້ຜັດທະນາເຂື່ອນດຳເນີນການຝຶກຊ້ອມການປະຕິບັດແຜນຮັບມືສຸກເສີນຕົວຈິງຮ່ວມກັບຂະແໜງການ, ປະຊາຊົນທີ່ອາດໄດ້ຮັບຜົນກະທົບ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມເນື້ອໃນຂອງແຜນຮັບມືສຸກເສີນ ທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍສະບັບນີ້.

ການຝຶກຊ້ອມປະຕິບັດແຜນຮັບມືສຸກເສີນ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

ມາດຕາ 50 ການຈັດຕັ້ງປະຕິບັດແຜນຮັບມືສຸກເສີນ

ໃນການຕອບໂຕ້ ຫຼື ແກ້ໄຂເຫດສຸກເສີນ ຜູ້ຜັດທະນາເຂື່ອນ ຕ້ອງປະເມີນ ແລະ ກຳນົດເຫດການທີ່ເກີດຂຶ້ນ ໃຫ້ໄວເທົ່າທີ່ຈະໄວໄດ້ ແລ້ວນຳໃຊ້ວິທີການປ້ອງກັນ ແລະ ແກ້ໄຂ ຕາມທີ່ໄດ້ກຳນົດໄວ້ຢູ່ໃນແຜນຮັບມືສຸກເສີນໃຫ້ມີ ປະສິດທິພາບ, ປະສິດທິຜົນ ແລະ ທັນການ.

ການປະຕິບັດແຜນຮັບມືສຸກເສີນ ແມ່ນ ປະກອບດ້ວຍ ສີ່ຂັ້ນຕອນ ດັ່ງນີ້:

1. ຂັ້ນຕອນທີ 1: ການກວດກາເຫດການ, ການປະເມີນຜົນ ແລະ ການກຳນົດລະດັບເຫດສຸກເສີນ;
2. ຂັ້ນຕອນທີ 2: ການແຈ້ງເຕືອນ ແລະ ປະສານງານ;
3. ຂັ້ນຕອນທີ 3: ການປະຕິບັດງານສຸກເສີນ;
4. ຂັ້ນຕອນທີ 4: ການສິ້ນສຸດເຫດການ ແລະ ການຕິດຕາມຜົນ.

ໃນກໍລະນີເກີດເຫດສຸກເສີນ ຜູ້ຜັດທະນາເຂື່ອນ ຕ້ອງເປັນເຈົ້າການຈັດຕັ້ງປະຕິບັດຕາມແຜນຮັບມືສຸກເສີນຢ່າງຮີບດ່ວນ ພ້ອມທັງປະສານສົມທົບກັບ ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນຕ່າງໆ ແລະ ຂະແໜງການກ່ຽວຂ້ອງ ເພື່ອຫຼຸດຜ່ອນຜົນກະທົບຕ່າງໆທີ່ເກີດຂຶ້ນ ຕາມລະດັບຂອງເຫດການສຸກເສີນ.

ງົບປະມານ ໃນການຈັດຕັ້ງປະຕິບັດແຜນຮັບມືສຸກເສີນ ແມ່ນ ຄວາມຮັບຜິດຊອບຂອງຜູ້ຜັດທະນາເຂື່ອນ.

ຂັ້ນຕອນ ແລະ ເນື້ອໃນລະອຽດການຈັດຕັ້ງປະຕິບັດແຜນຮັບມືສຸກເສີນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ພາກທີ V
ການກວດສອບ ແລະ ການກວດກາ ດ້ານຄວາມປອດໄພຂອງເຂື່ອນ

ມາດຕາ 51 ປະເພດ ແລະ ເນື້ອໃນການກວດສອບ ແລະ ການກວດກາ

ຜູ້ຜັດທະນາເຂື່ອນ ຕ້ອງກວດສອບ ແລະ ກວດກາ ດ້ານຄວາມປອດໄພຂອງເຂື່ອນ ໃນທຸກໄລຍະຂອງການພັດທະນາເຂື່ອນ ຊຶ່ງປະກອບດ້ວຍ ສີ່ປະເພດ ການກວດສອບ ແລະ ການກວດກາ ດັ່ງນີ້:

1. ການກວດສອບ ແລະ ການກວດກາ ເປັນປະຈຳ;
2. ການກວດສອບ ແລະ ການກວດກາ ເປັນໄລຍະ;
3. ການກວດສອບ ແລະ ການກວດກາ ແບບພິເສດ;
4. ການກວດສອບ ແລະ ການກວດກາ ຢ່າງລະອຽດ ແລະ ຄົບຖ້ວນ;

ຜູ້ພັດທະນາເຂື່ອນຕ້ອງດຳເນີນ ການກວດສອບ ແລະ ການກວດກາ ຢ່າງລະອຽດ ແລະ ຄົບຖ້ວນ ຕາມກຳນົດເວລາ ດັ່ງນີ້:

1. ເຂື່ອນທີ່ມີຄວາມສ່ຽງຮ້າຍແຮງ ໃຫ້ດຳເນີນທຸກ ຫ້າປີ ພາຍຫຼັງການກັກເກັບນ້ຳ ຫຼື ພາຍຫຼັງເກີດ ເຫດການໄພພິບັດໃດໜຶ່ງທີ່ຮ້າຍແຮງ;

2. ເຂື່ອນທີ່ມີຄວາມສ່ຽງສູງ ໃຫ້ດຳເນີນທຸກ ແປດປີ ພາຍຫຼັງການກັກເກັບນ້ຳ ຫຼື ພາຍຫຼັງເກີດເຫດ ການໄພພິບັດໃດໜຶ່ງທີ່ຮ້າຍແຮງ;

3. ເຂື່ອນທີ່ມີຄວາມສ່ຽງກາງ ໃຫ້ດຳເນີນທຸກ ສິບປີ ພາຍຫຼັງການກັກເກັບນ້ຳ ຫຼື ພາຍຫຼັງເກີດເຫດ ການໄພພິບັດໃດໜຶ່ງທີ່ຮ້າຍແຮງ;

4. ເຂື່ອນທີ່ມີຄວາມສ່ຽງຕ່ຳ ໃຫ້ດຳເນີນ ພາຍຫຼັງເກີດເຫດການໄພພິບັດໃດໜຶ່ງທີ່ຮ້າຍແຮງ.

ເນື້ອໃນການກວດສອບ ແລະ ການກວດກາ ແຕ່ລະປະເພດ ໃຫ້ປະຕິບັດຕາມລະບຽບການຂອງຂະ ແໜງການທີ່ກ່ຽວຂ້ອງ.

ມາດຕາ 52 ການກວດກາຄຸນນະພາບຂອງເຂື່ອນ ກ່ອນມອບໂອນໃຫ້ລັດຖະບານ

ຜູ້ພັດທະນາເຂື່ອນ ຕ້ອງດຳເນີນການກວດກາຄຸນນະພາບຂອງເຂື່ອນ ເພື່ອປະເມີນສະພາບຄວາມ ເປັນຈິງຂອງເຂື່ອນ ແລະ ບຳລຸງຮັກສາສ້ອມແປງໃຫ້ຢູ່ໃນສະພາບການດຳເນີນງານທີ່ດີ ຕາມການອອກແບບ ກ່ອນມອບໂອນໃຫ້ລັດຖະບານ.

ຜູ້ພັດທະນາເຂື່ອນ ຕ້ອງຮ່ວມມືກັບຂະແໜງການທີ່ກ່ຽວຂ້ອງ ໃນການຄັດເລືອກທີ່ປຶກສາເອກະລາດ ເພື່ອດຳເນີນການກວດກາ ແລະ ຢັ້ງຢືນ ຄຸນນະພາບຂອງເຂື່ອນ. ສຳລັບຄ່າໃຊ້ຈ່າຍໃຫ້ແກ່ທີ່ປຶກສາເອກະລາດໃນ ການກວດກາ ແລະ ຢັ້ງຢືນຄຸນນະພາບຂອງເຂື່ອນ ໃຫ້ເປັນຄວາມຮັບຜິດຊອບຂອງຜູ້ພັດທະນາເຂື່ອນ.

ຂັ້ນຕອນ ແລະ ວິທີການກວດກາຄຸນນະພາບຂອງເຂື່ອນ ກ່ອນມອບໂອນໃຫ້ລັດຖະບານ ໄດ້ກຳນົດ ໄວ້ໃນລະບຽບການຕ່າງຫາກ.

ພາກທີ VI

ສິດ ແລະ ພັນທະຂອງຜູ້ພັດທະນາເຂື່ອນ ແລະ ຜູ້ໄດ້ຮັບຜົນກະທົບ

ມາດຕາ 53 ສິດຂອງຜູ້ພັດທະນາເຂື່ອນ

ຜູ້ພັດທະນາເຂື່ອນ ມີສິດ ດັ່ງນີ້:

1. ໄດ້ຮັບການປົກປ້ອງ ສິດ ແລະ ຜົນປະໂຫຍດ ຕາມກົດໝາຍ ແລະ ສັນຍາທີ່ໄດ້ເຊັນກັນ;

2. ພັດທະນາເຂື່ອນ ຕາມການອະນຸຍາດຂອງລັດຖະບານ;

3. ສະເໜີ ຫຼື ຮ້ອງຟ້ອງ ຕໍ່ການຈັດຕັ້ງທີ່ກ່ຽວຂ້ອງ ໃນກໍລະນີມີຂໍ້ຂັດແຍ່ງ ເພື່ອພິຈາລະນາແກ້ໄຂ;

4. ໄດ້ຮັບຄຳແນະນຳດ້ານເຕັກນິກວິຊາການ ແລະ ເຕັກໂນໂລຊີ, ຂໍ້ມູນ ຂ່າວສານ, ມາດຕະຖານ ກ່ຽວກັບ ການອອກແບບ, ການກໍ່ສ້າງ, ການດຳເນີນງານ ແລະ ການບຳລຸງຮັກສາ ລວມທັງຄວາມປອດໄພຂອງ ເຂື່ອນ;

5. ຊີ້ແຈງຜົນການກວດສອບ, ກວດກາ ແລະ ປະເມີນຜົນ ຄວາມປອດໄພຂອງເຂື່ອນ ໃຫ້ຂະແໜງ ການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

6. ໄດ້ຮັບການຮ່ວມມື ກ່ຽວກັບການພັດທະນາ, ການຄຸ້ມຄອງ, ການຕິດຕາມ, ການກວດສອບ ແລະ ການກວດກາ ຄວາມປອດໄພຂອງເຂື່ອນຂອງຕົນ;

7. ມອບໂອນຊັບສິນໂຄງການ, ສິ່ງປະກອບສ້າງ ແລະ ເອກະສານທັງໝົດຂອງໂຄງການ ຕາມການສະເໜີ ແລະ ຕາມການເຫັນດີຂອງລັດຖະບານ ຫຼື ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ພາຍຫຼັງໂຄງການໝົດອາຍຸການສຳປະທານ;

8. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 54 ພັນທະຂອງຜູ້ພັດທະນາເຂື່ອນ

ຜູ້ພັດທະນາເຂື່ອນ ມີພັນທະ ດັ່ງນີ້:

1. ປະຕິບັດຕາມກົດໝາຍ, ມາດຕະຖານເຕັກນິກຂອງເຂື່ອນ, ລະບຽບການຄວາມປອດໄພຂອງເຂື່ອນໃນການສຶກສາ, ການອອກແບບ, ການກໍ່ສ້າງ, ການດຳເນີນງານ ແລະ ການບຳລຸງຮັກສາ ຢ່າງເຂັ້ມງວດ;

2. ຊົດເຊີຍຜົນກະທົບ ກ່ອນການລົງມືກໍ່ສ້າງ ແລະ ຟື້ນຟູຊີວິດການເປັນຢູ່ຂອງຜູ້ໄດ້ຮັບຜົນກະທົບ;

3. ສ້າງຄູ່ມື ການກວດສອບ, ການກວດກາ, ການທົດສອບ, ການທົດລອງ, ແຜນການໃນການດຳເນີນງານ, ແຜນການບຳລຸງຮັກສາໂຄງການ ໃຫ້ມີຄວາມປອດໄພ;

4. ດຳເນີນງານເຂື່ອນ ໃຫ້ມີຄວາມປອດໄພ ແລະ ເມື່ອມີຄວາມຜິດພາດໃດໜຶ່ງເກີດຂຶ້ນ ກໍຕ້ອງສ້ອມແປງ ແລະ ແກ້ໄຂ ຢ່າງທັນການ;

5. ມີປະກັນໄພຕາມສັນຍາ ໃນໄລຍະການພັດທະນາເຂື່ອນ ແລະ ມີການປະກັນສັງຄົມໃຫ້ແກ່ພະນັກງານຢ່າງຄົບຖ້ວນ ຕາມກົດໝາຍ;

6. ກໍ່ສ້າງ, ດຳເນີນງານ ແລະ ບຳລຸງຮັກສາ ໃຫ້ຖືກຕ້ອງຕາມລະບຽບການ ແລະ ມາດຕະຖານເຕັກນິກ ເພື່ອປ້ອງກັນຄວາມເສຍຫາຍ, ຄວາມບໍ່ປອດໄພຕໍ່ສາທາລະນະ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ເສດຖະກິດ;

7. ວາງມາດຕະການດ້ານຄວາມປອດໄພຂອງເຂື່ອນ ກ່ຽວກັບຄວາມສ່ຽງດ້ານທໍລະນີວິທະຍາ, ຄວາມແຮງຂອງແຜ່ນດິນໄຫວ, ໄພນ້ຳຖ້ວມ ແລະ ເຫດການອື່ນ ທີ່ອາດມີຜົນກະທົບຕໍ່ໂຄງສ້າງ ແລະ ສິ່ງປະກອບອື່ນຂອງເຂື່ອນ;

8. ຮັບຜິດຊອບປະຕິບັດຕາມແຜນຮັບມືສຸກເສີນ ຕະຫຼອດອາຍຸການໃຊ້ງານຂອງເຂື່ອນ;

9. ທົບທວນການປະຕິບັດງານດ້ານຄວາມປອດໄພຂອງເຂື່ອນ ແລະ ແຜນຮັບມືສຸກເສີນ ຢ່າງເປັນປົກກະຕິ ເພື່ອໃຫ້ແຜນດັ່ງກ່າວສອດຄ່ອງກັບຫຼັກວິທະຍາສາດ ແລະ ຄວາມກ້າວໜ້າດ້ານເຕັກໂນໂລຊີ, ຮັບປະກັນຄວາມປອດໄພ;

10. ລາຍງານ ແລະ ສະໜອງຂໍ້ມູນ ຂ່າວສານ ດ້ານຄວາມປອດໄພຂອງເຂື່ອນ ຕາມກຳນົດເວລາ ໃຫ້ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຕິດຕາມ ກວດກາ;

11. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ທີ່ຮັບຜິດຊອບກ່ຽວກັບຄວາມປອດໄພຂອງເຂື່ອນ, ການຝຶກອົບຮົມ, ການເຜີຍແຜ່ ຂໍ້ມູນ ຂ່າວສານ ກ່ຽວກັບຄວາມສ່ຽງຂອງເຂື່ອນ;

12. ຖືກົດຈະກຳຄວາມປອດໄພຂອງເຂື່ອນ ເປັນບຸລິມະສິດທຳອິດ ແລະ ເອົາໃຈໃສ່ຄວບຄຸມຢ່າງເຄັ່ງຄັດ ໂດຍສະເພາະເຂື່ອນທີ່ມີຄວາມສ່ຽງສູງ ແລະ ຄວາມສ່ຽງຮ້າຍແຮງ;

13. ອອກແບບ ແລະ ກໍ່ສ້າງຫົນທາງເຂົ້າຫາພື້ນທີ່ຂອງເຂື່ອນ ແລະ ໂຕເຂື່ອນ ໃຫ້ສາມາດນຳໃຊ້ໄດ້ໃນທຸກກໍລະນີ, ທຸກສະພາວະເງື່ອນໄຂ ແລະ ລະດູການ ທັງໃນກໍລະນີປົກກະຕິ ແລະ ເກີດເຫດສຸກເສີນ;

14. ປະຕິບັດຕາມ ຄຳສັ່ງ, ແຈ້ງການ, ຄຳແນະນຳ ຂອງລັດຖະບານ ແລະ ຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບມາດຕະການຄວາມປອດໄພຂອງເຂື່ອນຢ່າງເຂັ້ມງວດ;

15. ຕິດຕາມ, ກວດສອບ ແລະ ກວດກາ ການປະເມີນຜົນຄວາມປອດໄພຂອງເຂື່ອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

16. ຮັບຜິດຊອບຄ່າໃຊ້ຈ່າຍ ສຳລັບການຄຸ້ມຄອງ, ການຕິດຕາມ, ການກວດສອບ ແລະ ການກວດກາ ຄວາມປອດໄພຂອງເຂື່ອນ ໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງ;

17. ໃຊ້ແທນຄ່າເສຍຫາຍ ທີ່ເກີດຂຶ້ນໃນກໍລະນີ ການກໍ່ສ້າງ, ການດຳເນີນງານຂອງເຂື່ອນ ແລະ ການບຳລຸງຮັກສາເຂື່ອນ ຊຶ່ງໄດ້ກໍ່ຄວາມເສຍຫາຍແກ່ ຊີວິດ, ຊັບສິນ ແລະ ສຸຂະພາບ ຂອງຜູ້ອື່ນ ແລະ ສິ່ງແວດລ້ອມ;

18. ຮັບຜິດຊອບຕໍ່ຄ່າໃຊ້ຈ່າຍ ໃນການວ່າຈ້າງວິສະວະກອນ ຫຼື ບໍລິສັດທີ່ປຶກສາເອກະລາດ ເພື່ອເຮັດວຽກດ້ານວິຊາການ ໃຫ້ລັດຖະບານ ກ່ຽວກັບການກວດກາ ການອອກແບບ ແລະ ການກໍ່ສ້າງເຂື່ອນ ໃຫ້ມີຄຸນນະພາບ ແລະ ຄວາມປອດໄພ;

19. ສ້າງ, ພັດທະນາຊັບພະຍາກອນມະນຸດ, ບຸກຄະລະກອນໃຫ້ເປັນມືອາຊີບ ແລະ ຊຳນານງານ;

20. ສະຫຼຸບ, ລາຍງານ ກ່ຽວກັບ ການອອກແບບ, ການກໍ່ສ້າງ, ການດຳເນີນງານຂອງເຂື່ອນ, ການບຳລຸງຮັກສາ ແລະ ຂໍ້ມູນ ຂ່າວສານ ກ່ຽວກັບຄວາມປອດໄພຂອງເຂື່ອນ ໃຫ້ຂະແໜງການທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

21. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 55 ສິດ ຂອງຜູ້ໄດ້ຮັບຜົນກະທົບ

ຜູ້ທີ່ໄດ້ຮັບຜົນກະທົບ ມີສິດ ດັ່ງນີ້:

1. ໄດ້ຮັບການປົກປ້ອງ ສິດ ແລະ ຜົນປະໂຫຍດ ອັນຊອບທຳຕາມກົດໝາຍ;

2. ໄດ້ຮັບຄວາມປອດໄພຕໍ່ ຊີວິດ, ສຸຂະພາບ, ຊັບສິນ, ສິ່ງແວດລ້ອມ ໃນການກໍ່ສ້າງ, ການດຳເນີນງານຂອງເຂື່ອນ ແລະ ການບຳລຸງຮັກສາເຂື່ອນ;

3. ສະເໜີ, ຮ້ອງຟ້ອງ ໃນກໍລະນີເຫັນວ່າ ການກໍ່ສ້າງ, ການດຳເນີນງານຂອງເຂື່ອນ, ການບຳລຸງຮັກສາເຂື່ອນ ແລະ ອ່າງເກັບນ້ຳ ມີຄວາມຜິດພາດໃດໜຶ່ງ ທີ່ມີຜົນກະທົບຕໍ່ ຊີວິດ, ສຸຂະພາບ, ຊັບສິນ ແລະ ສິ່ງແວດລ້ອມ;

4. ໄດ້ຮັບຂໍ້ມູນ ຂ່າວສານ ທີ່ຈຳເປັນ ທີ່ຜົວພັນກັບຄວາມປອດໄພຕໍ່ ຊີວິດ, ຊັບສິນ, ສັງຄົມ ແລະ ສິ່ງແວດລ້ອມ ໃນໄລຍະກໍ່ສ້າງ, ກັກເກັບນ້ຳ, ດຳເນີນງານ ແລະ ບຳລຸງຮັກສາເຂື່ອນ;

5. ໄດ້ຮັບການແຈ້ງເຕືອນກ່ຽວກັບຄວາມປອດໄພລ່ວງໜ້າ ຢ່າງຄົບຖ້ວນ, ທັນການ ຈາກຜູ້ພັດທະນາເຂື່ອນ ຫຼື ພາກສ່ວນທີ່ກ່ຽວຂ້ອງ ໃນກໍລະນີມີໄພອັນຕະລາຍ ຕໍ່ຄວາມໝັ້ນຄົງຂອງເຂື່ອນ ໃນໄລຍະການກໍ່ສ້າງ, ການດຳເນີນງານ, ການບຳລຸງຮັກສາ, ການກັກເກັບນ້ຳ ແລະ ການປ່ອຍນ້ຳອອກຈາກອ່າງເກັບນ້ຳ;

6. ໄດ້ຮັບການແນະນຳ, ການຝຶກຊ້ອມ ຈາກຜູ້ພັດທະນາເຂື່ອນ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນແຜນການຮັບມືສຸກເສີນຂອງເຂື່ອນ;

7. ໄດ້ຮັບການຊ່ວຍເຫຼືອ ຈາກຜູ້ພັດທະນາເຂື່ອນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຍົກຍ້າຍຢ່າງທັນການ ແລະ ປອດໄພ ເມື່ອມີເຫດການຜິດປົກກະຕິ, ການດຳເນີນງານຂອງເຂື່ອນຜິດພາດ, ເກີດນ້ຳນອງ, ແຜ່ນດິນໄຫວ ຫຼື ເຂື່ອນແຕກພັງ;

8. ໄດ້ຮັບການຊົດເຊີຍຄ່າເສຍຫາຍຕໍ່ ຊີວິດ, ສຸຂະພາບ ແລະ ຊັບສິນ ທີ່ເກີດຈາກການກໍ່ສ້າງ, ການດຳເນີນງານ ແລະ ບຳລຸງຮັກສາເຂື່ອນຢ່າງຄົບຖ້ວນ ແລະ ທັນເວລາ;

9. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 56 ພັນທະຂອງຜູ້ໄດ້ຮັບຜົນກະທົບ

ຜູ້ໄດ້ຮັບຜົນກະທົບ ມີພັນທະ ດັ່ງນີ້:

1. ປະກອບສ່ວນໃນການປົກປັກຮັກສາເຂື່ອນໃຫ້ມີຄວາມປອດໄພ;

2. ແຈ້ງຂໍ້ມູນ ໃຫ້ຜູ້ພັດທະນາເຂື່ອນ ແລະ/ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງຢ່າງທັນການ ໃນກໍລະນີ ເຫັນວ່າເຂື່ອນ ມີຄວາມຜິດປົກກະຕິ;

3. ປະກອບສ່ວນໃນການປົກປັກຮັກສາປ່າໄມ້ເຂດອ່າງຮັບນ້ຳ ແລະ ລຸ່ມເຂື່ອນ;

4. ປະກອບສ່ວນໃນການປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນບໍລິເວນເຂື່ອນ;

5. ອຳນວຍຄວາມສະດວກ, ເຂົ້າຮ່ວມ ການຝຶກອົບຮົມ, ການຝຶກຊ້ອມ ແລະ ການປະຕິບັດແຜນຮັບມືສຸກເສີນ;

6. ປະຕິບັດລະບຽບການ, ມາດຕະການຄວາມປອດໄພຂອງເຂື່ອນ, ແຈ້ງການ, ຄຳແນະນຳ, ຂໍ້ມູນຂ່າວສານ ທີ່ຜູ້ພັດທະນາເຂື່ອນ ແລະ/ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ ສະໜອງ ຫຼື ວາງອອກ ໃນແຕ່ລະໄລຍະ;

7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ພາກທີ VII
ຂໍ້ຫ້າມ

ມາດຕາ 57 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ບຸກລຸກ, ທຳລາຍປ່າໄມ້ ເປັນຕົ້ນ ປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຍອດນ້ຳ ຊຶ່ງເຮັດໃຫ້ເຂື່ອນ ບໍ່ມີຄວາມປອດໄພ;

2. ບຸກລຸກສະຖານທີ່, ລັກ, ທຳລາຍອຸປະກອນ ແລະ ສິ່ງປະກອບສ້າງຂອງເຂື່ອນ;

3. ປຸກສ້າງ, ຕັ້ງຖິ່ນຖານ, ທຳການຜະລິດ ຫຼື ທຳມາຫາກິນ ຢູ່ໃກ້ບໍລິເວນ ຫຼື ເຂດຫວງຫ້າມ ຂອງໂຄງການໂດຍບໍ່ໄດ້ຮັບອະນຸຍາດ;

4. ນຳໃຊ້ ຫຼື ແຈ້ງ ຂໍ້ມູນທີ່ບໍ່ມີມູນຄວາມຈິງກ່ຽວກັບຄວາມປອດໄພຂອງເຂື່ອນ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

ມາດຕາ 58 ຂໍ້ຫ້າມສຳລັບຜູ້ພັດທະນາເຂື່ອນ

ຫ້າມຜູ້ພັດທະນາເຂື່ອນ ມີພຶດຕິກຳ ດັ່ງນີ້:

1. ດຳເນີນການສຶກສາສຳຫຼວດ, ການອອກແບບ, ການກໍ່ສ້າງ, ການກັກເກັບນ້ຳ ແລະ ການດຳເນີນງານຂອງເຂື່ອນ ໂດຍບໍ່ໄດ້ຮັບອະນຸຍາດ;

2. ດຳເນີນການກໍ່ສ້າງ ແລະ ການປັບປຸງຮາກຖານເຂື່ອນ ໃນກໍລະນີ ບໍ່ຜ່ານການກວດກາ ແລະ ບໍ່ໄດ້ຮັບໃບຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

3. ກັກເກັບນ້ຳ ຫຼື ປ່ອຍນ້ຳ ທີ່ບໍ່ຢູ່ໃນແຜນຜະລິດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງ ແລະ ບໍ່ໄດ້ແຈ້ງເຕືອນລ່ວງໜ້າ;

4. ກໍ່ສ້າງເຂື່ອນ ແລະ ຕິດຕັ້ງອຸປະກອນ, ສ່ວນປະກອບຂອງເຂື່ອນ ທີ່ບໍ່ໄດ້ຄຸນນະພາບ ແລະ ມາດຕະຖານ;

5. ນຳໃຊ້ ຫຼື ແຈ້ງຂໍ້ມູນກ່ຽວກັບການສຶກສາສຳຫຼວດ, ການອອກແບບ, ການກໍ່ສ້າງ, ການກັກເກັບນ້ຳ ແລະ ການດຳເນີນງານຂອງເຂື່ອນ ທີ່ບໍ່ຖືກຕ້ອງ ແລະ ບໍ່ມີຄວາມປອດໄພ;

6. ຂາດຄວາມຮັບຜິດຊອບໃນການຕິດຕາມ, ການກວດສອບ ແລະ ການກວດກາ ຄວາມປອດໄພຂອງເຂື່ອນ;

7. ດຳເນີນງານຂອງເຂື່ອນທີ່ຜິດພາດ ຊຶ່ງພາໃຫ້ເກີດຄວາມເສຍຫາຍຕໍ່ ຊີວິດ, ຊັບສິນຂອງປະຊາຊົນ ແລະ ສິ່ງແວດລ້ອມ;

8. ຊື້ຈ້ຳ, ໃຫ້ສິນບົນ ພະນັກງານ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ແລະ ສົມຮູ້ຮ່ວມຄິດກັບປະຊາຊົນ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

ມາດຕາ 59 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ຄວາມປອດໄພຂອງເຂື່ອນ

ຫ້າມພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ຄວາມປອດໄພຂອງເຂື່ອນ ມີພຶດຕິກຳ ດັ່ງນີ້:

1. ປະຕິບັດໜ້າທີ່ດ້ວຍຄວາມເລີ່ນເລີ້, ປະໝາດ, ເມີນເສີຍ, ຂາດຄວາມຮັບຜິດຊອບ;

2. ທວງເອົາ, ຂໍເອົາ, ຮັບເອົາສິນບົນຈາກ ບຸກຄົນ, ນິຕິບຸກຄົນ ຫຼື ຜູ້ຜັດທະນາເຂື່ອນ ລວມທັງບໍລິສັດຮັບເໝົາກໍ່ສ້າງທີ່ກ່ຽວຂ້ອງ;

3. ປອມແປງເອກະສານ ແລະ ອອກເອກະສານບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ ຊຶ່ງເຮັດໃຫ້ການຜັດທະນາເຂື່ອນບໍ່ມີຄວາມປອດໄພ ລວມທັງການທຳລາຍເອກະສານກ່ຽວກັບຄວາມປອດໄພຂອງເຂື່ອນ;

4. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ໝູ່ເພື່ອນ;

5. ປະຕິບັດໜ້າທີ່ເກີນຂອບເຂດ, ສົມຮູ້ຮ່ວມຄິດ ກັບ ຜູ້ຜັດທະນາເຂື່ອນ ກ່ຽວກັບການອອກແບບ, ການກໍ່ສ້າງ, ການດຳເນີນງານ ແລະ ການບຳລຸງຮັກສາ ຊຶ່ງກໍ່ຄວາມເສຍຫາຍ ແລະ ເຮັດໃຫ້ເຂື່ອນບໍ່ມີຄວາມປອດໄພ;

6. ດຳເນີນກິດຈະການ ຫຼື ເຂົ້າຮ່ວມ ການອອກແບບ, ການກໍ່ສ້າງ ແລະ ການດຳເນີນງານເຂື່ອນ ທີ່ພົວພັນກັບວຽກງານທີ່ຕົນຮັບຜິດຊອບ ໂດຍບໍ່ໄດ້ຮັບອະນຸຍາດ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

ພາກທີ VIII

ການຄຸ້ມຄອງ ແລະ ການກວດກາ ວຽກງານຄວາມປອດໄພຂອງເຂື່ອນ

ໝວດທີ 1

ການຄຸ້ມຄອງວຽກງານຄວາມປອດໄພຂອງເຂື່ອນ

ມາດຕາ 60 ອົງການຄຸ້ມຄອງວຽກງານຄວາມປອດໄພຂອງເຂື່ອນ

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຄວາມປອດໄພຂອງເຂື່ອນ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນ

ເຈົ້າການປະສານສົມທົບກັບ ກະຊວງກະສິກຳ ແລະ ປ່າໄມ້, ກະຊວງໂຍທາທິການ ແລະ ຂົນສົ່ງ, ຂະແໜງການ ອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

ອົງການຄຸ້ມຄອງວຽກງານຄວາມປອດໄພຂອງເຂື່ອນ ປະກອບດ້ວຍ:

1. ກະຊວງພະລັງງານ ແລະ ບໍ່ແຮ່;
2. ພະແນກພະລັງງານ ແລະ ບໍ່ແຮ່ຂັ້ນແຂວງ;
3. ຫ້ອງການພະລັງງານ ແລະ ບໍ່ແຮ່ຂັ້ນເມືອງ.

ໃນກໍລະນີຈຳເປັນ ອາດສ້າງຕັ້ງຄະນະກຳມະການສະເພາະກິດກ່ຽວກັບຄວາມປອດໄພຂອງເຂື່ອນຂັ້ນ ສູນກາງ ແລະ ຂັ້ນແຂວງ ຂຶ້ນກໍໄດ້.

ມາດຕາ 61 ສິດ ແລະ ໜ້າທີ່ຂອງກະຊວງພະລັງງານ ແລະ ບໍ່ແຮ່

ໃນການຄຸ້ມຄອງວຽກງານຄວາມປອດໄພຂອງ ເຂື່ອນໄຟຟ້າ ແລະ ເຂື່ອນທາງແຮ່ ກະຊວງພະລັງງານ ແລະ ບໍ່ແຮ່ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ຫຼື ປັບປຸງ ນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍ ກ່ຽວກັບວຽກງານຄວາມປອດໄພຂອງເຂື່ອນ ແລ້ວນຳສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍ ກ່ຽວກັບຄວາມ ປອດໄພຂອງເຂື່ອນ ເປັນລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍ ກ່ຽວກັບຄວາມປອດໄພຂອງເຂື່ອນ;

4. ຊີ້ນຳ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດກ່ຽວກັບຄວາມປອດໄພຂອງເຂື່ອນ ໃນ ຂອບເຂດທົ່ວປະເທດ;

5. ຮັບຮອງເອົາການແຕ່ງຕັ້ງຫົວໜ້າວິສະວະກອນ ຕາມການສະເໜີຂອງຜູ້ພັດທະນາເຂື່ອນ ສຳລັບ ເຂື່ອນຂະໜາດໃຫຍ່;

6. ຊີ້ນຳ ການສຳຫຼວດ ເກັບກຳຂໍ້ມູນ, ການຂຶ້ນສະຖິຕິ ກ່ຽວກັບຄວາມປອດໄພຂອງເຂື່ອນ ໃນຂອບ ເຂດທົ່ວປະເທດ ລວມທັງສ້າງຖານຂໍ້ມູນຄວາມປອດໄພຂອງເຂື່ອນ;

7. ຄົ້ນຄວ້າກ່ຽວກັບ ການຕໍ່ອາຍຸ, ການໂຈະ ຫຼື ການຖອນໃບອະນຸຍາດ ການດຳເນີນທຸລະກິດ ຂອງຜູ້ພັດທະນາເຂື່ອນຂະໜາດໃຫຍ່;

8. ແຈ້ງເຕືອນ ເພື່ອໃຫ້ຜູ້ພັດທະນາເຂື່ອນປັບປຸງ ຫຼື ແກ້ໄຂບັນຫາທີ່ພົວພັນກັບການຄວາມປອດ ໄພຂອງເຂື່ອນ ໃນກໍລະນີເຫັນວ່າບັນຫາດັ່ງກ່າວຈະສົ່ງຜົນເສຍຫາຍຕໍ່ລັດຖະບານ ຫຼື ຄວາມປອດໄພດ້ານ ຊີວິດ, ສຸຂະພາບ ແລະ ຊັບສິນຂອງປະຊາຊົນ;

9. ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນ ກ່ຽວກັບວຽກງານຄວາມ ປອດໄພຂອງເຂື່ອນ;

10. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການ ຄຸ້ມຄອງຄວາມປອດໄພຂອງເຂື່ອນ;

11. ພົວພັນ ຮ່ວມມືກັບສາກົນ ກ່ຽວກັບວຽກງານຄວາມປອດໄພຂອງເຂື່ອນ ແລະ ການຊອກ ແຫຼ່ງທຶນ ເພື່ອພັດທະນາວຽກງານຄວາມປອດໄພຂອງເຂື່ອນ;

12. ສະຫຼຸບ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດວຽກງານຄວາມປອດໄພຂອງເຂື່ອນ ໃຫ້ລັດ ຖະບານ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 62 ສິດ ແລະ ໜ້າທີ່ຂອງພະແນກພະລັງງານ ແລະ ບໍ່ແຮ່ຂັ້ນແຂວງ

ໃນການຄຸ້ມຄອງວຽກງານຄວາມປອດໄພຂອງ ເຂື່ອນໄຟຟ້າ ແລະ ເຂື່ອນຫາງແຮ່ ພະແນກພະລັງງານ ແລະ ບໍ່ແຮ່ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍ ກ່ຽວກັບຄວາມປອດໄພຂອງເຂື່ອນ ເປັນລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

2. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍ ກ່ຽວກັບຄວາມປອດໄພຂອງເຂື່ອນ;

3. ຊີ້ນຳ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດກ່ຽວກັບຄວາມປອດໄພຂອງເຂື່ອນ;

4. ຮັບຮອງເອົາການແຕ່ງຕັ້ງຫົວໜ້າວິສະວະກອນ ຕາມການສະເໜີຂອງຜູ້ພັດທະນາເຂື່ອນຂະໜາດນ້ອຍ;

5. ຄົ້ນຄວ້າກ່ຽວກັບ ການຕໍ່ອາຍຸ, ການໂຈະ ຫຼື ການຖອນໃບອະນຸຍາດ ການດຳເນີນທຸລະກິດຂອງຜູ້ພັດທະນາເຂື່ອນຂະໜາດນ້ອຍ;

6. ຊີ້ນຳ ການສຳຫຼວດ ເກັບກຳຂໍ້ມູນ, ການຂຶ້ນສະຖິຕິ ກ່ຽວກັບຄວາມປອດໄພຂອງເຂື່ອນ ແລ້ວລາຍງານໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ລວມທັງສ້າງຖານຂໍ້ມູນຄວາມປອດໄພຂອງເຂື່ອນ;

7. ຄົ້ນຄວ້າ, ໃຫ້ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຄວາມປອດໄພຂອງເຂື່ອນສຳລັບເຂື່ອນຂະໜາດນ້ອຍ;

8. ສຶກສາ ຄົ້ນຄວ້າ ແລະ ໃຫ້ຄຳເຫັນດ້ານວິຊາການ ກ່ຽວກັບວຽກງານຄວາມປອດໄພຂອງເຂື່ອນຂະໜາດນ້ອຍ;

9. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນຂອງຕົນ ໃນການຄຸ້ມຄອງວຽກງານຄວາມປອດໄພຂອງເຂື່ອນ;

10. ສະຫຼຸບ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດວຽກງານຄວາມປອດໄພຂອງເຂື່ອນ ຕໍ່ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 63 ສິດ ແລະ ໜ້າທີ່ ຂອງຫ້ອງການພະລັງງານ ແລະ ບໍ່ແຮ່ຂັ້ນເມືອງ

ໃນການຄຸ້ມຄອງວຽກງານຄວາມປອດໄພຂອງ ເຂື່ອນໄຟຟ້າ ແລະ ເຂື່ອນຫາງແຮ່ ຫ້ອງການພະລັງງານ ແລະ ບໍ່ແຮ່ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍ ກ່ຽວກັບຄວາມປອດໄພຂອງເຂື່ອນ ເປັນລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

2. ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍ ກ່ຽວກັບຄວາມປອດໄພຂອງເຂື່ອນ;

3. ໃຫ້ຄຳແນະນຳ ໃນການຈັດຕັ້ງປະຕິບັດວຽກງານຄວາມປອດໄພຂອງເຂື່ອນ ທີ່ມີຄວາມສ່ຽງຕ່ຳ;

4. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນຂອງຕົນ ໃນການຄຸ້ມຄອງວຽກງານຄວາມປອດໄພຂອງເຂື່ອນ;

5. ສະຫຼຸບ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດວຽກງານຄວາມປອດໄພຂອງເຂື່ອນ ຕໍ່ຂັ້ນເທິງ ຂອງຕົນ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 64 ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້, ກະຊວງໂຍທາທິການ ແລະ ຂົນສົ່ງ

ໃນການຄຸ້ມຄອງວຽກງານຄວາມປອດໄພຂອງ ເຂື່ອນຊົນລະປະທານ ແລະ ເຂື່ອນນ້ຳປະປາ ກະຊວງ ກະສິກຳ ແລະ ປ່າໄມ້, ກະຊວງໂຍທາທິການ ແລະ ຂົນສົ່ງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ຫຼື ປັບປຸງ ນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍ ກ່ຽວ ກັບວຽກງານຄວາມປອດໄພຂອງເຂື່ອນ ໂດຍປະສານສົມທົບກັບກະຊວງພະລັງງານ ແລະ ບໍ່ແຮ່ ແລ້ວນຳສະເໜີ ລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍ ກ່ຽວກັບຄວາມ ປອດໄພຂອງເຂື່ອນ ເປັນລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍ ກ່ຽວກັບຄວາມປອດໄພຂອງເຂື່ອນ;

4. ຊີ້ນຳ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດກ່ຽວກັບຄວາມປອດໄພຂອງເຂື່ອນ ໃນ ຂອບເຂດທົ່ວປະເທດ;

5. ຮັບຮອງ ເອົາການແຕ່ງຕັ້ງຫົວໜ້າວິສະວະກອນ ຕາມການສະເໜີຂອງຜູ້ພັດທະນາເຂື່ອນ;

6. ຊີ້ນຳ ການສຳຫຼວດ ເກັບກຳຂໍ້ມູນ, ການຂຶ້ນສະຖິຕິ ກ່ຽວກັບຄວາມປອດໄພຂອງເຂື່ອນ ໃນ ຂອບເຂດທົ່ວປະເທດ ລວມທັງສ້າງຖານຂໍ້ມູນຄວາມປອດໄພຂອງເຂື່ອນ;

7. ແຈ້ງເຕືອນ ເພື່ອໃຫ້ຜູ້ພັດທະນາເຂື່ອນປັບປຸງ ຫຼື ແກ້ໄຂບັນຫາທີ່ພົວພັນກັບຄວາມປອດໄພ ຂອງເຂື່ອນ ໃນກໍລະນີເຫັນວ່າບັນຫາດັ່ງກ່າວ ຈະສົ່ງຜົນເສຍຫາຍຕໍ່ລັດຖະບານ ຫຼື ຄວາມປອດໄພດ້ານ ຊີວິດ, ສຸຂະພາບ ແລະ ຊັບສິນຂອງປະຊາຊົນ;

8. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການ ຄຸ້ມຄອງຄວາມປອດໄພຂອງເຂື່ອນ;

9. ສະຫຼຸບ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດວຽກງານຄວາມປອດໄພຂອງເຂື່ອນ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 65 ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ໃຫ້ຄວາມຮ່ວມມືກັບ ອົງການຄຸ້ມຄອງວຽກງານຄວາມປອດໄພຂອງເຂື່ອນ, ກະຊວງ ກະສິກຳ ແລະ ປ່າໄມ້, ກະຊວງໂຍທາທິການ ແລະ ຂົນສົ່ງ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງ ຕົນ ໃນການຄຸ້ມຄອງ, ຕິດຕາມ ກວດກາ ແລະ ຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄວາມປອດໄພຂອງເຂື່ອນ.

ໝວດທີ 2
ການກວດກາວຽກງານຄວາມປອດໄພຂອງເຂື່ອນ

ມາດຕາ 66 ອົງການກວດກາວຽກງານຄວາມປອດໄພຂອງເຂື່ອນ

ອົງການກວດກາວຽກງານຄວາມປອດໄພຂອງເຂື່ອນ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານຄວາມປອດໄພຂອງເຂື່ອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 60 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ປະຊາຊົນ ແລະ ສື່ມວນຊົນ.

ມາດຕາ 67 ເນື້ອໃນການກວດກາ

ການກວດກາວຽກງານຄວາມປອດໄພຂອງເຂື່ອນ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດຂັ້ນຕອນຂອງການດຳເນີນວຽກງານຄວາມປອດໄພຂອງເຂື່ອນ;

2. ການປະຕິບັດກຳນົດເວລາ ຂອງການດຳເນີນວຽກງານຄວາມປອດໄພຂອງເຂື່ອນ;

3. ການປະຕິບັດບົດວິພາກເສດຖະກິດເຕັກນິກການເງິນ ກ່ຽວກັບວຽກງານຄວາມປອດໄພຂອງເຂື່ອນ;

4. ການປະຕິບັດແຜນການດຳເນີນງານ ກ່ຽວກັບວຽກງານຄວາມປອດໄພຂອງເຂື່ອນ;

5. ການປະຕິບັດມາດຕະການຄວາມປອດໄພ ທາງດ້ານວິຊາການ;

6. ການປະຕິບັດ ກົດໝາຍ ແລະ ສັນຍາ ກ່ຽວກັບວຽກງານຄວາມປອດໄພຂອງເຂື່ອນ;

7. ການປະຕິບັດມາດຕະຖານອຸປະກອນເຂື່ອນ;

8. ການອອກແບບ, ການກໍ່ສ້າງ, ການຕິດຕັ້ງ ແລະ ການຄຸ້ມຄອງອຸປະກອນ ແລະ ສິ່ງປະກອບສ້າງຂອງເຂື່ອນ;

9. ການນຳໃຊ້ມາດຕະການ ຈຳກັດຜົນກະທົບຕໍ່ສິ່ງແວດລ້ອມ;

10. ການໃຊ້ແທນຄ່າເສຍຫາຍຕໍ່ ຊີວິດ, ສຸຂະພາບ, ຊັບສິນຂອງປະຊາຊົນ ແລະ ສິ່ງແວດລ້ອມ;

11. ລະບົບການເງິນ, ນະໂຍບາຍ ແລະ ສະຫວັດດີການສັງຄົມ.

ມາດຕາ 68 ຮູບການ ການກວດກາ

ການກວດກາວຽກງານຄວາມປອດໄພຂອງເຂື່ອນມີ ສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນຂອງອົງການບໍລິຫານຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດກາຕາມ ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການຂອງອົງການບໍລິຫານ, ຄະນະກວດກາແຕ່ລະຂັ້ນ ແລະ ຄຳສະເໜີຂອງຝົນລະເມືອງ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ໂດຍບໍ່ແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ລ່ວງໜ້າ.

ໃນການກວດກາວຽກງານຄວາມປອດໄພຂອງເຂື່ອນນັ້ນ ຕ້ອງປະຕິບັດໜ້າທີ່ໃຫ້ຖືກຕ້ອງຕາມກົດໝາຍຢ່າງເຂັ້ມງວດ.

ພາກທີ IX
ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 69 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ໃນການເຄື່ອນໄຫວວຽກງານຄວາມປອດໄພຂອງເຂື່ອນ ຈະໄດ້ຮັບການຍ້ອງຍໍສັນລະເສີນ ແລະ ນະໂຍບາຍອື່ນ ຕາມລະບຽບການ.

ມາດຕາ 70 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ກໍລະນີ ເບົາ ຫຼື ໜັກ.

ພາກທີ X
ບົດບັນຍັດສຸດທ້າຍ

ມາດຕາ 71 ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

ມາດຕາ 72 ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 1 ຕຸລາ 2022 ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ